ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ກໍລະກົດ 2026
ປີທີ 15
ສະບັບທີ 1075


## ຜົນກອງປະຊຸມສະໄໝສາມັນຂອງລັດຖະບານ ປະຈຳເດືອນກໍລະກົດ



(ສພຊ) - ຕອນແລງວັນທີ 28 ກໍລະກົດນີ້ ທີ່ສຳນັກງານນາຍົກລັດຖະມົນຕີ, ທ່ານ ເຂັງ ຄຳແກ້ວໜູຈັນ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ) ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບຜົນກອງປະຊຸມສະໄໝສາມັນຂອງລັດຖະບານ ປະຈຳເດືອນກໍລະກົດ 2026 ໂດຍທ່ານໃຫ້ຮູ້ວ່າ: ກອງປະຊຸມດັ່ງກ່າວ ໄດ້ຈັດຂຶ້ນລະຫວ່າງວັນທີ 27-28 ກໍລະກົດ ທີ່ສຳນັກງານນາຍົກລັດຖະມົນຕີ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ; ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ ແລະ ຜູ້ຕາງໜ້າເຂົ້າຮ່ວມແບບເຊິ່ງໜ້າ; ບັນດາປະທານ, ຮອງປະທານຄະນະກຳມະການປົກຄອງນະຄອນຫຼວງ ແລະ ບັນດາແຂວງ ເຂົ້າຮ່ວມຜ່ານລະບົບກອງປະຊຸມທາງໄກ ເພື່ອຮັບຟັງ ແລະ ປະກອບຄຳເຫັນ ຕໍ່ການລາຍງານ

ອ່ານຕໍ່ໜ້າ 4



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ພັກປະຊາຊົນ ປະຕິວັດລາວ ເປັນພັກມາກ-ເລນິນອັນແທ້ຈິງ ຂອງຊົນຊັ້ນກຳມະກອນລາວ, ເປັນກອງກຳລັງນຳໜ້າ ທີ່ມີການຈັດຕັ້ງແໜ້ນ ແລະ ເປັນອົງການຈັດຕັ້ງສູງສຸດຂອງຊົນຊັ້ນກຳມະກອນ.

(ນິພົນເລືອກເຟັ້ນ ເຫຼັ້ມ 1, ໜ້າ 155)

ອ່ານຕໍ່ສະບັບໜ້າ

## ການນຳພັກ-ລັດ ເຂົ້າຮ່ວມຊົມຮູບເງົາ "ຝົນແດງ"




ອ່ານຕໍ່ໜ້າ 8

## ເປີດຂະບວນການຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຄະນະພັກສະພາແຫ່ງຊາດ ແລະ ວັນສ້າງຕັ້ງສະຫະພັນແມ່ຍິງລາວ



(ສພຊ) - ວັນທີ 17 ກໍລະກົດ 2026 ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີເປີດຂະບວນການເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ ແລະ ປາຖະກະຖາວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 71 ປີ ພາຍໃຕ້ການເປັນປະທານຂອງສະຫາຍ ມອນໄຊ ລາວມົວຊົ່ງ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳວຽກອົງການຈັດຕັ້ງມະຫາຊົນ ທັງເປັນຫົວໜ້າຄະນະຮັບຜິດຊອບວຽກງານຂະບວນການ, ມີບັນດາຮອງປະທານສະພາແຫ່ງຊາດ, ຄະນະປະຈຳພັກ, ຄະນະບໍລິຫານງານພັກ, ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານ, ຄະນະຮັບຜິດຊອບວຽກງານຂະບວນການ, ພະນັກງານອາວຸໂສບຳນານ, ສະມາຊິກພັກ, ພະນັກງານ-ລັດຖະກອນ ແລະ ສາມອົງການຈັດຕັ້ງມະຫາຊົນຂອງ ສພຊ ເຂົ້າຮ່ວມ

ອ່ານຕໍ່ໜ້າ 5

## ຮຽບຮຽງເນື້ອໃນ 2 ຮ່າງກົດໝາຍ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍຄັງເງິນແຫ່ງລັດ (ສະບັບສ້າງໃໝ່) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 13-17 ກໍລະກົດ 2026 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເຂົ້າຮ່ວມເປັນປະທານ ແລະ ກ່າວເປີດຂອງທ່ານກອງແກ້ວ ໄຊສົງຄາມ

ອ່ານຕໍ່ໜ້າ 2

## ຫຼາຍບໍລິສັດມອບເງິນໃຫ້ສະພາແຫ່ງຊາດ




(ສພຊ) - ວັນທີ 22 ກໍລະກົດ 2026, ຫຼາຍບໍລິສັດໄດ້ມອບເງິນ 500 ລ້ານກີບ ໃຫ້ສະພາແຫ່ງຊາດເພື່ອຮັບໃຊ້ເຂົ້າໃນບັ້ນກະກຽມເປີດກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ ທີ່ຈະໄຂຂຶ້ນໃນມໍ່ໆນີ້ ແລະ ມອບເງິນ 500 ລ້ານກີບ ໃຫ້ຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ X ເພື່ອເປັນການຊົມ

ອ່ານຕໍ່ໜ້າ 7

## ສຳເລັດກອງປະຊຸມໃຫຍ່ຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ ຄັ້ງທີ III




ອ່ານຕໍ່ໜ້າ 3

# ເຜີຍແຜ່ຄູ່ມືວຽກງານເສດຖະກິດ ແລະ ການເງິນ



(ສພຊ) - ກອງປະຊຸມເຜີຍແຜ່ປຶ້ມຄູ່ມືວຽກງານຂົງເຂດເສດຖະກິດ ແລະ ການເງິນ ໄດ້ຈັດຂຶ້ນໃນວັນທີ 22-24 ກໍລະກົດ 2026 ທີ່ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍການເປັນປະທານຂອງທ່ານ ຈັນທະບູນ ສຸກອາລຸນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການເສດຖະກິດ ແລະ ການເງິນ (ກສງ); ເຂົ້າຮ່ວມມີທ່ານ ສຳນານ ສິນທະນິ ຮອງປະທານສະພາປະຊາຊົນແຂວງຫຼວງພະບາງ, ບັນດາທ່ານສະມາຊິກສະພາແຫ່ງຊາດ(ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ທີ່ເປັນກຳມະການຂອງ ກສງ ທີ່ມາຈາກ 6 ແຂວງຄື: ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ ແລະ ໄຊຍະບູລີ; ຕາງໜ້າຈາກສະຖານທູດອົດສະຕຣາລີປະຈຳ ສປປລາວ, ຫົວໜ້າກົມ-ຮອງຫົວໜ້າກົມແລະແຂກຖືກເຊີນ.

ຈຸດປະສົງເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງຕໍ່ເນື້ອໃນປຶ້ມຄູ່ມືຂົງເຂດເສດຖະກິດ-ການເງິນ ເຊິ່ງກອງປະຊຸມໄດ້ສະເໜີເນື້ອໃນຄວາມຮູ້ພື້ນຖານກ່ຽວກັບເສດຖະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ, ການຄຸ້ມການລົງທຶນ ແລະ ການຕິດຕາມກວດກາວຽກງານດັ່ງກ່າວ ແນໃສ່ສ້າງເງື່ອນໄຂໃຫ້ສຳມະນາກອນ ແລະ ວິທະຍາກອນ ໄດ້ມີການຄົ້ນຄວ້າ ແລະ ແລກປ່ຽນບົດຮຽນຮ່ວມກັນ ເພື່ອເຂົ້າໃຈບັນຫາໃຫ້ເລິກເຊິ່ງ ແລະ ສາມາດນຳເອົາບົດຮຽນເຫຼົ່ານີ້ ໄປຜັນຂະຫຍາຍ ແລະ ນຳໃຊ້ໃນພາກປະຕິບັດຕົວຈິງ ໃຫ້ໄດ້ຮັບໝາກຜົນຢ່າງແທ້ຈິງ.

ທ່ານ ຈັນທະບູນ ສຸກອາລຸນ ໄດ້ກ່າວວ່າ: ກອງປະຊຸມຄັ້ງນີ້ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ຕໍ່ການປະຕິບັດພາລະບົດບາດທີ່ສຳຄັນຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ໃນຖານະເປັນອົງການນິຕິບັນຍັດ, ເປັນອົງການພິຈາລະນາບັນຫາສຳຄັນຂອງຊາດ ແລະ ເປັນອົງການຕິດຕາມກວດກາການປະຕິບັດໜ້າທີ່ຂອງອົງການບໍລິຫານ ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ເຊິ່ງຖືເປັນວຽກໜຶ່ງທີ່ສຳຄັນ ແລະ ເປັນເສັ້ນເລືອດໃຫຍ່ ທັງເປັນປັດໄຈຕັດສິນຊີ້ຂາດຕໍ່ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ແລະ ສ້າງຄວາມເຂັ້ມແຂງ, ຍົກລະດັບຄວາມຮູ້, ພັດທະນາທັກສະການວິເຄາະວິໄຈ ເພື່ອຕິດຕາມມະຕິ ແລະ ສາມາດຕັ້ງຄຳຖາມຕໍ່ອົງການບໍລິຫານ ແລະ ການສ້າງຄວາມເປັນມືອາຊີບໃຫ້ແກ່ ສສຊ ແລະ ສສຂ; ທ່ານຍັງກ່າວຕື່ມອີກວ່າ: ເອກະສານໄດ້ຜ່ານການຄົ້ນຄວ້າ, ຮຽບຮຽງ ແລະ ກັ່ນຕອງຢ່າງລະອຽດຖີ່ຖ້ວນພໍສົມຄວນ ຈາກຄະນະຮັບຜິດຊອບແລະຜູ້ຊ່ຽວຊານເຊິ່ງໄດ້ກຳນົດຂອບເຂດສິດ, ໜ້າທີ່, ຫຼັກການເຮັດວຽກ ຕະຫຼອດຮອດຂັ້ນຕອນການຄຸ້ມຄອງ-ບໍລິຫານດ້ານງົບປະມານ, ການເງິນ, ການລົງທຶນ, ເງິນຕາ ໃຫ້ມີຄວາມເປັນເອກະພາບ, ຖືກຕ້ອງຕາມຂັ້ນຕອນກົດໝາຍ ແລະລະບຽບການເຮັດໃຫ້ການພິຈາລະນາບັນຫາພື້ນຖານກ່ຽວກັບເສດຖະກິດ-ການເງິນ ມີປະສິດທິພາບ, ປະສິດທິຜົນ.

ກອງປະຊຸມໄດ້ຮັບຟັງການລາຍງານຜົນສຳເລັດການສ້າງປຶ້ມຄູ່ມືກຳມາທິການເສດຖະກິດ ແລະ ການເງິນ ເຊິ່ງປະກອບມີ 7 ຫົວຄື; 1. ປຶ້ມຄູ່ມືການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ; 2. ປຶ້ມຄູ່ມືຕົວຊີ້ວັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນນຕາ; 3. ປຶ້ມຄູ່ມືການຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ; 4. ປຶ້ມຄວາມຮູ້ພື້ນຖານການເງິນ ແລະ ງົບປະມານ ເພື່ອການພິຈາລະນາຮັບຮອງແຜນງົບປະມານແຫ່ງລັດ; 5. ປຶ້ມຄວາມຮູ້ພື້ນຖານເງິນຕາ ແລະ ທະນາຄານ ເພື່ອການພິຈາລະນາຮັບຮອງແຜນເງິນຕາ; 6. ປຶ້ມຄວາມຮູ້ພື້ນຖານເສດຖະສາດ, ການວາງແຜນ ແລະ ການລົງທຶນ ເພື່ອການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ; 7. ຄວາມຮູ້ພື້ນຖານສະຖິຕິ ແລະ ວິທີວິໄຈປະລິມານ ເພື່ອການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ.

ນອກຈາກນັ້ນ, ຍັງໄດ້ມີການມອບ-ຮັບບັນດາປຶ້ມຄູ່ມືຕ່າງໆໃຫ້ສະພາປະຊາຊົນແຂວງ 6 ແຂວງອີກດ້ວຍ.




# ຫາລືການປັບປຸງນິຕິກຳຂອງ ກຕທ



(ສພຊ) - ລະຫວ່າງວັນທີ 18-20 ກໍລະກົດ 2026 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ, ກຳມາທິການການຕ່າງປະເທດ (ກຕທ) ໄດ້ຈັດກອງປະຊຸມຄົ້ນຄວ້າ, ປຶກສາຫາລື ແລະ ປັບປຸງ ມະຕິຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການການຕ່າງປະເທດ ແລະ ຂໍ້ຕົກລົງຂອງຫ້ອງວ່າການສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສອງກົມເສນາທິການຂອງ ກຕທ ພາຍໃຕ້ການເປັນປະທານຂອງທ່ານ ເພັດລາ ທັນທະວົງສາ ຮອງປະທານກຳມາທິການການຕ່າງປະເທດ ໂດຍມີບັນດາທ່ານການນຳຂອງກຳມາທິການ, ຄະນະກົມ-ພະແນກ, ລັດຖະກອນວິຊາການ ຂອງ ກຕທ ແລະ ພາກສ່ວນກ່ຽວຂ້ອງຂອງ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ, ສຳມະນາກອນທີ່ເຂົ້າຮ່ວມ ໄດ້ເອົາໃຈໃສ່ຍົກສູງສະຕິປັນຍາໃນການປະກອບຄຳເຫັນຢ່າງພາວະວິໄສ ແລະ ກົງໄປກົງມາ ຕໍ່ເນື້ອໃນກອງປະຊຸມ ໂດຍສະເພາະກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສອງກົມທີ່ເປັນເສນາທິການ ແລະ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກຳມາທິການການຕ່າງປະເທດ ບົນພື້ນຖານຕີລາຄາການຈັດຕັ້ງ ແລະ ການເຄື່ອນໄຫວໃນໄລຍະຜ່ານມາ, ຖອດຖອນບົດຮຽນຈາກການເຄື່ອນໄຫວຕົວຈິງ ມາກຳນົດ ແລະ ປັບປຸງເນື້ອໃນຮ່າງດັ່ງກ່າວ ເພື່ອຮັບປະກັນໄດ້ຄຸນນະພາບ, ບົດບາດຕົວຈິງ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງສອດຄ່ອງກັບບົດບາດການເຄື່ອນໄຫວວຽກງານຕ່າງປະເທດຂອງສພຊ ໃນໄລຍະໃໝ່.

ພາຍຫຼັງສຳເລັດກອງປະຊຸມ, ຄະນະຮັບຜິດຊອບ ຈະໄດ້ສະຫຼຸບສັງລວມ ແລະ ນຳເອົາຜົນຂອງກອງປະຊຸມ ລາຍງານຕໍ່ ຄປຈສພຊ ເພື່ອພິຈາລະນາ, ອະນຸມັດ ແລະ ປະກາດໃຊ້ ແນໃສ່ນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ.



## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ຮອງປະທານສະພາແຫ່ງຊາດ; ມີທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ, ທ່ານ ຈັນທະບູນ ສຸກອາລຸນ ປະທານກຳມາທິການເສດຖະກິດແລະການເງິນພ້ອມດ້ວຍບັນດາທ່ານຮອງລັດຖະມົນຕີກະຊວງການເງິນ, ກະຊວງຍຸຕິທຳ, ຮອງຫົວໜ້າອົງການ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ກອງແກ້ວ ໄຊສົງຄາມ ກ່າວວ່າ: ກອງປະຊຸມຄັ້ງນີ້ ຈັດຂຶ້ນເພື່ອປະຕິບັດຕາມການຊີ້ນຳຂອງປະທານກອງປະຊຸມສະໄໝວິສາມັນເທື່ອທີ I ຂອງສະພາແຫ່ງຊາດ ຊຸດທີ X ໂດຍມີຈຸດປະສົງຕົ້ນຕໍເພື່ອຮ່ວມກັນຄົ້ນຄວ້າ, ເລືອກເຟັ້ນ ແລະ ປັບປຸງບັນດາຄຳຄິດຄຳເຫັນຢ່າງຫຼາກຫຼາຍຂອງສະມາຊິກສະພາແຫ່ງຊາດ(ສສຊ)ທີ່ໄດ້ປະກອບໃສ່ຮ່າງກົດໝາຍທັງສອງສະບັບໃຫ້ມີເນື້ອໃນຄົບຖ້ວນ, ຈະແຈ້ງ, ຮັດກຸມ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍອື່ນໆແລະແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໄດ້ຢ່າງຍາວນານ ແລະ ມີປະສິດທິພາບສູງພາຍຫຼັງການປະກາດໃຊ້; ພ້ອມກັນນີ້, ທ່ານຍັງໄດ້ເນັ້ນໜັກໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ຈົ່ງເຊີດຊູຄວາມຮັບຜິດຊອບ ແລະ ເປັນເຈົ້າການຮ່ວມກັນຄົ້ນຄວ້າຄຳເຫັນຂອງ ສສຊ ຢ່າງເລິກເຊິ່ງ, ດ້ວຍເຫດແລະຜົນເພື່ອຮັບປະກັນໃຫ້ກົດໝາຍສອງສະບັບນີ້ ມີເນື້ອໃນຄົບຖ້ວນ, ຈະແຈ້ງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບແລະປະສິດທິຜົນສູງສຸດ.

ພາຍຫຼັງສຳເລັດກອງປະຊຸມຄັ້ງນີ້, ຄະນະຮັບຜິດຊອບຈະໄດ້ສັງລວມເນື້ອໃນທັງໝົດເພື່ອລາຍງານຕໍ່ກອງປະຊຸມ ຄປຈສພຊ ພິຈາລະນາ, ກ່ອນຈະສະເໜີຕໍ່ປະທານສະພາແຫ່ງຊາດລົງລາຍເຊັນ ແລະ ນຳສະເໜີຕໍ່ປະທານປະເທດເພື່ອອອກລັດຖະດຳລັດປະກາດໃຊ້ຢ່າງເປັນທາງການ.

**(ອານຸສອນ ພູມມີທອນ)**

# ລະດົມຄຳເຫັນຕໍ່ຮ່າງມະຕິການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການ



(ສປນວ) - ວັນທີ 1 ກໍລະກົດຜ່ານມາ, ທີ່ສະພາປະຊາຊົນນະຄອນຫຼວງວຽງຈັນ, ຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກົດໝາຍ ແລະ ຍຸຕິທຳ ໄດ້ຈັດກອງປະຊຸມປຶກສາຫາລື ແລະ ລະດົມແນວຄິດ ຕໍ່ຮ່າງມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການ ໂດຍການເປັນປະທານທ່ານ ນາງ ບົວລະພັນ ທິລະສັກ ປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກົດໝາຍ ແລະ ຍຸຕິທຳ; ຮ່ວມມີຮອງປະທານຄະນະກຳມະການ, ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1, ບັນດາທ່ານສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນທີ່ສັງກັດຄະນະກຳມະການ ແລະ ບັນດາພະແນກການທີ່ກ່ຽວຂ້ອງ ພ້ອມດ້ວຍພະນັກງານພາຍໃນຄະນະກຳມະການເຂົ້າຮ່ວມຢ່າງພ້ອມພຽງ ເພື່ອລະດົມຄຳຄິດເຫັນ ແລະ ແລກປ່ຽນບົດຮຽນຈາກບັນດາທ່ານຜູ້ເຂົ້າຮ່ວມ ເພື່ອໃຫ້ຮ່າງມະຕິມີຄວາມຮັດກຸມ, ສອດຄ່ອງກັບສະພາບຕົວຈິງ ແລະ ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ.




## ສຳເລັດ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ III ຂອງຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ (ຫສຊ) ໄດ້ໄຂຂຶ້ນໃນຕອນເຊົ້າວັນທີ 23 ກໍລະກົດ 2026 ທີ່ສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍ ບຸນຈັນ ສີວົງພັນ ກຳມະການສູນກາງພັກ, ເລຂາຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ; ເຂົ້າຮ່ວມ ແລະ ໃຫ້ກຽດໂອ້ລົມຕໍ່ກອງປະຊຸມໃຫຍ່ ມີສະຫາຍ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກ, ຮອງປະທານສະພາແຫ່ງຊາດ; ບັນດາສະຫາຍກຳມະການຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ, ສະມາຊິກພັກທີ່ເປັນຜູ້ແທນກອງປະຊຸມໃຫຍ່ ແລະ ແຂກຖືກເຊີນຈາກຄະນະພັກຮາກຖານ, ໜ່ວຍພັກຮາກຖານທີ່ຂຶ້ນກັບອົງຄະນະພັກສະພາແຫ່ງຊາດ, ມີຕາງໜ້າຄະນະພັກຂອງ 3 ຫ້ອງວ່າການ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໃຫຍ່ໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງຂອງຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ, ຮັບຮອງເອົາແຜນພັດທະນາຂອງຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ ໄລຍະ 5 ປີ (2026-2030) ໂດຍມີ 5 ແຜນງານ, 32 ໂຄງການ ແລະ ຮັບຮອງເອົາບົດສຳຫຼວດຕີລາຄາການນຳພາ-ຊີ້ນຳລວມຂອງຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ ຊຸດເກົ່າ (2021-2025); ພ້ອມນັ້ນ, ຍັງໄດ້ຮັບຟັງການປະກອບຄຳເຫັນຂອງຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນ ແລະ ຜູ້ຕາງໜ້າໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ຫສຊ ໂດຍໄດ້ສະແດງຄວາມເປັນເອກະພາບຢ່າງສູງຕໍ່ການຕີລາຄາຜົນສຳເລັດຂອງການນຳພາລວມຂອງຄະນະພັກຮາກຖານ ຕະຫຼອດໄລຍະ 5 ປີຜ່ານມາ.

ໃນກອງປະຊຸມໃຫຍ່, ຜູ້ແທນຍັງໄດ້ໃຊ້ສິດປະຊາທິປະໄຕ ປ່ອນບັດເລືອກຕັ້ງເອົາຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ ຊຸດໃໝ່ ຕາມມາດຕະຖານ-ເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ສະໝັກຮັບເລືອກຕັ້ງ 12 ສະຫາຍ ຍິງ 1 ສະຫາຍ ແລະ ເລືອກໄດ້ຄະນະພັກຊຸດໃໝ່ ຈຳນວນ 9 ສະຫາຍ ຍິງ 1 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກໄດ້ເປັນເອກະພາບເລືອກເອົາສະຫາຍ ບຸນຈັນ ສີວົງພັນ ກຳມະການສູນກາງພັກ ເປັນເລຂາຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ, ສະຫາຍ ຄຳສະໄໝ ສຳມາວົງ ເປັນຮອງເລຂາ, ສະຫາຍ ເຂັມພອນ ອາໂນໄທ ເປັນປະທານກວດກາພັກ, ສະຫາຍ ແສງແກ້ວ ວົງນະລາດ ແລະ ສະຫາຍ ສະເຫຼີມໄຊ ນາມບຸດເປັນຮອງປະທານກວດກາພັກ. ພ້ອມກັນນີ້, ກອງປະຊຸມໃຫຍ່ຍັງໄດ້ເລືອກຕັ້ງເອົາຜູ້ແທນສົມບູນ ຈຳນວນ 101 ສະຫາຍ ແລະ ຜູ້ແທນສຳຮອງ 5 ສະຫາຍ ເພື່ອໄປເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ ເຊິ່ງຈະເປີດຂຶ້ນໃນຕໍ່ໜ້າ.

ກອງປະຊຸມໃຫຍ່ໄດ້ຮັບຟັງການໂອ້ລົມຂອງສະຫາຍ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກ, ຮອງປະທານສະພາແຫ່ງຊາດ ເຊິ່ງສະຫາຍໄດ້ຕີລາຄາສູງຕໍ່ຜົນສຳເລັດໃນການເຄື່ອນໄຫວວຽກງານໄລຍະຜ່ານມາ ແລະ ໃຫ້ທິດຊີ້ນຳບາງວຽກງານທີ່ຄະນະພັກຈະຕ້ອງໄດ້ເອົາໃຈໃສ່ປັບປຸງ ເປັນຕົ້ນ: ຄຸນນະພາບໃນການສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ; ປະສິດທິພາບໃນການນຳພາ-ຊີ້ນຳການປັບປຸງກໍ່ສ້າງພັກ, ການປັບປຸງກົງຈັກການຈັດຕັ້ງ, ການບັນຈຸສັບຊ້ອນ, ການຈັດວາງ, ການຂຶ້ນແຜນກຳນົດສ້າງ-ບຳລຸງພະນັກງານ; ຄຸນນະພາບໃນການປະຕິບັດພາລະບົດບາດຂອງຫ້ອງວ່າການສະພາແຫ່ງຊາດ ໂດຍສະເພາະການເປັນເສນາທິການທາງດ້ານເນື້ອໃນຮອບດ້ານ ແລະ ການອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວວຽກງານສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ; ການຂຶ້ນແຜນ ແລະ ສະໜອງງົບປະມານໃຫ້ສາມາດຕອບສະໜອງໄດ້ຕາມການປະຕິບັດໜ້າທີ່ການເມືອງ; ການໂຄສະນາເຜີຍແຜ່ບົດບາດຂອງສະພາແຫ່ງຊາດ; ການຄຸ້ມຄອງສະມາຊິກສະພາແຫ່ງຊາດ; ສ້າງໃຫ້ມີກົນໄກປະສານງານຢ່າງກົມກຽວ, ໂລ່ງລ່ຽນ ລະຫວ່າງຫ້ອງວ່າການສະພາແຫ່ງຊາດ ກັບຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ແລະ ອົງການກ່ຽວຂ້ອງອື່ນໆ ເພື່ອຮັບປະກັນການເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ. ສະຫາຍຍັງໄດ້ຊົມເຊີຍຕໍ່ບັນດາສະຫາຍທີ່ໄດ້ຮັບຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈຈາກບັນດາຜູ້ແທນກອງປະຊຸມໃຫຍ່ເລືອກເອົາໃຫ້ເປັນຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ ຊຸດໃໝ່, ຫວັງວ່າບັນດາສະຫາຍໃນຄະນະພັກຮາກຖານຊຸດໃໝ່ ຈະສືບຕໍ່ຊີ້ນຳ-ນຳພາຫ້ອງວ່າການໃຫ້ມີການປ່ຽນແປງໃໝ່ຢ່າງແຂງແຮງ ແລະ ເລິກເຊິ່ງ ເພື່ອເຮັດຫຼ້ອນໜ້າທີ່ການເມືອງຂອງຕົນໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ຊຸດທີ X.

# ຄະນະຜູ້ແທນ ສພຂ ຈຳປາສັກ ພົບປະຢ້ຽມຢາມ 2 ບໍລິສັດ ຢູ່ນະຄອນດົງນາຍ ສສ.ຫວຽດນາມ

(ສພຂ)-ວັນທີ 29 ມິຖຸນາ 2026 ທີ່ຜ່ານມາ, ຄະນະຜູ້ແທນສະພາປະຊາຊົນແຂວງຈຳປາສັກ ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ນະຄອນດົ່ງນາຍ ນຳໂດຍສະຫາຍ ປອ. ອາລຸນໄຊ ສູນນະລາດ ກຳມະການສູນກາງພັກ, ເລຂາຄະນະພັກແຂວງ, ປະທານສະພາປະຊາຊົນແຂວງຈຳປາສັກ ພ້ອມດ້ວຍຄະນະ ສົມທົບກັບ ສະຫາຍ ເຈີ່ນວັນ ມີ ກຳມະການຄະນະພັກນະຄອນ, ຮອງປະທານສະພາປະຊາຊົນນະຄອນດົງນາຍ ໄດ້ເຄື່ອນໄຫວພົບປະຢ້ຽມຢາມ ຢູ່ບໍລິສັດຮຸ້ນສ່ວນ ໂກ ໂກ ຫວຽດນາມ (Coco Vietnam Joint Stock Company) ເປັນຜູ້ຜະລິດ ວຸ້ນໝາກພ້າວ (Nata de Coco) ຂະໜາດໃຫຍ່ຂອງຫວຽດນາມ ພາຍໃຕ້ກຸ່ມ Vinacoco / GC Food ຜະລິດຕະພັນຖືກສົ່ງອອກໄປຫຼາຍກວ່າ 20 ປະເທດ ແລະ ໂຮງງານມີກຳລັງການຜະລິດຫຼາຍໝື່ນຕັນຕໍ່ປີ ແລະ ບໍລິສັດຮຸ້ນສ່ວນ ວີນາ (VINA Co., Ltd.) ຜະລິດ ແລະ ຈຳໜ່າຍອາຫານສັດ (ໄກ່, ໝູ, ງົວ, ເປັດ ແລະ ສັດລ້ຽງອື່ນໆ) ໂດຍມີກຳລັງຜະລິດຫຼາຍກວ່າ 5 ແສນໂຕນຕໍ່ປີ, ມາດຕະຖານ: ISO 9001:2015.




ການເຄື່ອນໄຫວໃນ 2 ຈຸດ, ຜູ້ບໍລິຫານຂອງທັງ 2 ບໍລິສັດ ໄດ້ສະແດງການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງນຳສະເໜີລາຍງານພາບລວມກ່ຽວກັບການຈັດຕັ້ງການດຳເນີນທຸລະກິດ, ຂະບວນການຜະລິດ, ການພັດທະນາຄວາມສາມາດດ້ານການຜະລິດ ແລະ ນຳສະເໜີຜະລິດຕະພັນຫຼັກ ແລະ ທິດທາງການພັດທະນາທີ່ເລັງໃສ່ຄວາມທັນສະໄໝ, ນຳໃຊ້ເຕັກໂນໂລຊີຂັ້ນສູງ, ຍົກລະດັບຄຸນນະພາບ ແລະ ພັດທະນາຢ່າງຍືນຍົງ. ພ້ອມທັງມີທັດສະນະກ່ຽວກັບສາຍພົວພັນມິດຕະພາບອັນດີງາມຂອງຫວຽດນາມ ແລະ ລາວ ເຊິ່ງເປັນຮາກຖານສຳຄັນໃຫ້ວິສາຫະກິດຂອງທັງສອງປະເທດເພີ່ມທະວີການເຊື່ອມໂຍງ, ຂະຫຍາຍການລົງທຶນ ແລະ ການຄ້າ.

ໃນໂອກາດນີ້, ສະຫາຍ ປອ. ອາລຸນໄຊ ສູນນະລາດ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດທີ່ບໍລິສັດຍາດໄດ້, ໂດຍສະເພາະຕໍ່ການລົງທຶນ, ຂີດຄວາມສາມາດໃນການຜະລິດ, ການນຳໃຊ້ເຕັກໂນໂລຊີ ແລະ ທິດທາງການພັດທະນາຢ່າງຍືນຍົງຂອງບໍລິສັດ ທັງ 2, ເປັນສິ່ງຢັ້ງຢືນໃຫ້ເຫັນເຖິງການພັດທະນາຢ່າງເຂັ້ມແຂງ ແລະ ມີລະບົບທີ່ທັນສະໄໝ. ການມາພົບຢ້ຽມຢາມໃນຄັ້ງນີ້ ບໍ່ພຽງແຕ່ເປັນໂອກາດໃນການຮັບຟັງການນຳສະເໜີກ່ຽວກັບສັກກະຍະພາບການຜະລິດ, ເຕັກໂນໂລຊີ ແລະ ຜະລິດຕະພັນເທົ່ານັ້ນ, ແຕ່ຍັງຈະເປັນການຊ່ວຍເສີມສ້າງການແລກປ່ຽນ, ສ້າງຄວາມເຂົ້າໃຈເຊິ່ງກັນ ແລະກັນ ໃນການເປີດກວ້າງໂອກາດໃຫ້ 2 ບໍລິສັດ ແລະ ບັນດາບໍລິສັດ ໃນນະຄອນດົ່ງນາຍ ທີ່ມີຄວາມສົນໃຈ ແລະ ມີແຜນການຂະຫຍາຍການລົງທຶນ ແລະ ການຄ້າ ໄປຍັງແຂວງຈຳປາສັກ ທີ່ມີພື້ນຖານ ແລະ ທ່າແຮງທີ່ສອດຄ່ອງກັບການດຳເນີນທຸລະກິດ ເຊິ່ງຫວັງວ່າທັງ 2 ບໍລິສັດ ຈະສືບຕໍ່ເສີມສ້າງການຮ່ວມມື ແລະ ຂະຫຍາຍກິດຈະການໄປຍັງແຂວງຈຳປາສັກ, ເຊື່ອໝັ້ນວ່າການພົບປະຢ້ຽມຢາມ 2 ບໍລິສັດໃນຄັ້ງນີ້, ຈະຊ່ວຍຂະຫຍາຍການຮ່ວມມືການລົງທຶນເຂົ້າໃນວຽກງານດັ່ງກ່າວຢູ່ແຂວງຈຳປາສັກ ເຊິ່ງຈະເປັນການປະກອບສ່ວນຢ່າງເປັນຮູບປະທຳໃນການເສີມສ້າງສາຍພົວພັນມິດຕະພາບຄວາມສາມັກຄີພິເສດອັນຍິ່ງໃຫຍ່ ທີ່ສອງພັກ ສອງລັດລາວ-ຫວຽດນາມເວົ້າລວມ, ເວົ້າສະເພາະແຂວງຈຳປາສັກ ກັບນະຄອນດົ່ງນາຍໃຫຍ່ເຕີບໃຫຍ່, ງອກງາມ ແລະ ຍາດໄດ້ຜົນສຳເລັດຮ່ວມກັນຢ່າງມີປະສິດທິພາບ.

ພາຍຫຼັງການພົບປະ, ຄະນະຜູ້ແທນສະພາປະຊາຊົນແຂວງຈຳປາສັກ ໄດ້ເຂົ້າຢ້ຽມຢາມພາກສະໜາມຊົມໂຮງງານ, ສາຍການຜະລິດ, ສຶກສາຂະບວນການນຳໃຊ້ເຕັກໂນໂລຊີໃນການຜະລິດ ແລະ ການແປຮູບຂອງທັງ 2 ບໍລິສັດອີກດ້ວຍ.

**(ສົມວິຈິດ ໄຊມົນຕີ)**

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ສະພາບພົ້ນເດັ່ນ ປະຈໍາເດືອນກໍລະກົດ ແລະ ທິດທາງແຜນວຽກຈຸດສຸມປະຈໍາເດືອນສິງຫາ2026.

ກອງປະຊຸມຄັ້ງນີ້ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄໍາເຫັນ ແລະ ພິຈາລະນາ ຕໍ່ບັນດາຫົວຂໍ້ໃນ 4 ວາລະສໍາຄັນ ຄື:

ວາລະທີ 1: ການປະຕິບັດວຽກຈຸດສຸມພົ້ນເດັ່ນປະຈໍາເດືອນກໍລະກົດ ແລະ ທິດທາງແຜນການປະຈໍາເດືອນສິງຫາ 2026 ຂອງລັດຖະບານ, ໃນນັ້ນ ວຽກງານພົ້ນເດັ່ນປະຈໍາເດືອນກໍລະກົດ ເຫັນວ່າ: ທົ່ວປະເທດ ສືບຕໍ່ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ໄດ້ເອົາໃຈໃສ່ເກັບກູ້ອາວຸດ, ວັດຖຸລະເບີດ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ, ແກ້ງສະແກມເມີ, ການລັກລອບຂຸດຄົ້ນແຮ່ທາດ, ການລັກລອບຄົນເຂົ້າ-ອອກເມືອງ, ການນໍາເຂົ້າ ແລະ ນໍາໃຊ້ພາຫະນະບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ; ສາມາດເກັບລາຍຮັບເຂົ້າງົບປະມານໄດ້ 64% ຂອງແຜນການປີ, ປະຕິບັດແຜນລາຍຈ່າຍງົບປະມານໄດ້ 42% ຂອງແຜນການປີ, ສະສົມຄັງສໍາຮອງເງິນຕາຕ່າງປະເທດກຸ້ມການນໍາເຂົ້າບໍ່ຫຼຸດ 5 ເດືອນ, ຄວບຄຸມອັດຕາເງິນເຟີ້ ສະເລ່ຍຢູ່ໃນລະດັບ7.6%. ພ້ອມກັນນັ້ນ, ການກໍ່ສ້າງ-ປັບປຸງພື້ນຖານໂຄງລ່າງເສັ້ນທາງ-ຂົວ, ການຜະລິດສິນຄ້າຮັບໃຊ້ພາຍໃນແລະສົ່ງອອກ, ການພັດທະນາວຽກງານສຶກສາ, ສາທາລະນະສຸກ, ພະລັງງານໄຟຟ້າ, ການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ການອອກໃບຕາດິນ, ການຄຸ້ມຄອງ-ພັດທະນາສີມືແຮງງານ, ການພັດທະນາພື້ນຖານໂຄງລ່າງການທ່ອງທ່ຽວ, ການສ້າງແລະປັບປຸງກົດໝາຍ, ການແກ້ໄຂບັນຫານໍ້າມັນເຊື້ອໄຟ, ການຫັນເປັນດິຈິຕອນແລະທັນສະໄໝ, ການປະຕິບັດຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ, ການເຄື່ອນໄຫວວຽກງານຕ່າງປະເທດ, ການປັບປຸງການຈັດຕັ້ງແຕ່ລະຂັ້ນ, ການປະກາດສ້າງຕັ້ງຕາແສງ ແລະ ອື່ນໆ ລ້ວນແຕ່ສືບຕໍ່ມີຄວາມຄືບໜ້າເປັນກ້າວໆ.

ຄຽງຄູ່ກັບຜົນສໍາເລັດດັ່ງກ່າວ ກໍຍັງມີວຽກງານຈໍານວນໜຶ່ງ ທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂໃຫ້ມີການຫັນປ່ຽນດີຂຶ້ນກວ່າເກົ່າ ເປັນຕົ້ນ ບັນຫາສະແກມເມີ, ຢາເສບຕິດ, ອຸບັດເຫດຕາມທ້ອງຖະໜົນ, ອັກຄີໄພ, ຂີ້ລັກງັດແງະ-ປຸ້ນຈີ້ຊິງຊັບ ແລະ ການສ້າງຄວາມບໍ່ສະຫງົບຢູ່ພາຍໃນສັງຄົມ; ບັນຫາໄຟຟ້າຕົກ, ການສະໜອງນໍ້າປະປາບໍ່ທັນພຽງພໍ; ການລັກລອບຂຸດຄົ້ນຊັບພະຍາກອນທໍາມະຊາດ, ການລັກລອບຄົນເຂົ້າ-ອອກເມືອງ; ການພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກຂອງປະຊາຊົນ; ການຄຸ້ມຄອງລາຄາສິນຄ້າ; ຄວາມຕື່ນຕົວເປັນເຈົ້າໃນການຈັດຕັ້ງປະຕິບັດທິດຊີ້ນໍາຂອງລັດຖະບານ; ການພັດທະນາ-ປັບປຸງພື້ນຖານໂຄງລ່າງເສັ້ນທາງ ແລະ ອື່ນໆ.

ສໍາລັບວາລະທີ 2: ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາຜົນການຄົ້ນຄວ້າປັບປຸງບັນຊີກິດຈະການຄວບຄຸມ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໂດຍຫຼຸດລົງຈາກ 44 ລາຍການ ເປັນ 20 ລາຍການ ເພື່ອໃຫ້ສອດຄ່ອງກັບທ່າອ່ຽງການພັດທະນາເສດຖະກິດ-ສັງຄົມ ກໍຄືກົດໝາຍທີ່ກ່ຽວຂ້ອງ.

ວາລະທີ 3: ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາບັນດາຮ່າງກົດໝາຍທີ່ຈະນໍາເຂົ້າຜ່ານກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ຈໍານວນ 16 ສະບັບ, ໃນນັ້ນ ມີກົດໝາຍສ້າງໃໝ່ 2 ສະບັບ ແລະ ປັບປຸງ 14 ສະບັບ; ກອງປະຊຸມໄດ້ຊີ້ນໍາກະຊວງ-ອົງການ ແລະ ພາກສ່ວນກ່ຽວຂ້ອງ ສືບຕໍ່ນໍາເອົາຮ່າງກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການຕົນ ໄປປັບປຸງຕື່ມບາງຈຸດໃຫ້ມີເນື້ອໃນຄົບຖ້ວນສົມບູນຂຶ້ນກວ່າເກົ່າ.

ວາລະທີ 4: ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາຮ່າງນິຕິກໍາ ຈໍານວນ 4 ສະບັບຄື: (1) ຮ່າງມະຕິວ່າດ້ວຍການພັດທະນາຊັບພະຍາກອນມະນຸດທີ່ມີຄຸນນະພາບຕອບສະໜອງການພັດທະນາໃນເງື່ອນໄຂໃໝ່, (2) ຮ່າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ, (3) ຮ່າງກົດໝາຍວ່າດ້ວຍການຈະລາຈອນທາງບົກ ແລະ (4) ຮ່າງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ;



ກອງປະຊຸມໄດ້ຊີ້ນໍາໃຫ້ພາກສ່ວນກ່ຽວຂ້ອງ ນໍາເອົາບັນດາຮ່າງນິຕິກໍາດັ່ງກ່າວ ໄປປັບປຸງໃຫ້ມີເນື້ອໃນຄົບຖ້ວນສົມບູນ, ລະອຽດ-ຈະແຈ້ງ, ຮັດກຸມ ແລະ ສອດຄ່ອງກັບທິດທາງການພັດທະນາເສດຖະກິດ-ສັງຄົມໃນຕໍ່ໜ້າ ເພື່ອນໍາສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາຮັບຮອງ.

ສໍາລັບແຜນວຽກຈຸດສຸມໃນເດືອນສິງຫາ, ລັດຖະບານຈະໄດ້ສືບຕໍ່ເອົາໃຈໃສ່ປະຕິບັດວຽກຈຸດສຸມທີ່ສໍາຄັນຈໍານວນໜຶ່ງດັ່ງນີ້:

1. ສືບຕໍ່ສຸມໃສ່ຮັບປະກັນສະຖຽນລະພາບທາງດ້ານການເມືອງໃຫ້ໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ໃນຂອບເຂດທົ່ວປະເທດ; ແກ້ໄຂປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ ໃຫ້ເຂັ້ມງວດ ແລະ ເດັດຂາດກວ່າເກົ່າ; ຕິດຕາມ ແລະ ຕອບໂຕ້ບັນດາຂ່າວບິດເບືອນ ແລະ ໃສ່ຮ້າຍປ້າຍສີຕ່າງໆ; ກະກຽມຄວາມພ້ອມຮອບດ້ານໃນການຮັບມືກັບໄພນໍ້າຖ້ວມ ເພື່ອຊ່ວຍເຫຼືອປະຊາຊົນເຂດນໍ້າຖ້ວມ ໃຫ້ທັນການ ແລະ ປອດໄພ.

2. ສຸມໃສ່ການເກັບລາຍຮັບງົບປະມານຈາກແຫຼ່ງລາຍຮັບທີ່ມີແລ້ວໃຫ້ຄົບຖ້ວນ, ເລັ່ງທວງໜີ້ຕ້ອງຮັບທີ່ຍັງຄ້າງຊໍາລະ, ໜີ້ສິນຄ່າບິນຜ່ານນ່ານຟ້າ ແລະ ອື່ນໆ, ລວມເຖິງການເກັບຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ ຢູ່ບັນດາຂະແໜງການ ແລະ ດ່ານສາກົນ; ຮີບຮ້ອນຄົ້ນຄວ້ານະໂຍບາຍ, ກົນໄກການຄຸ້ມຄອງຮ້ານຄ້າປອດພາສີໃນຕົວເມືອງ ເພື່ອກະຕຸ້ນກໍາລັງຊື້ຂອງນັກທ່ອງທ່ຽວ; ສືບຕໍ່ຄົ້ນຄວ້ານະໂຍບາຍພິເສດສໍາລັບການພັດທະນາແຂວງຫົວພັນ ແລະ ຜົ້ງສາລີ ໃຫ້ສໍາເລັດພາຍໃນເດືອນສິງຫານີ້.

3. ຕິດຕາມລາຄານໍ້າມັນໃນຕະຫຼາດໂລກຢ່າງໃກ້ຊິດ ແລະ ກຽມພ້ອມຮັບມືຕໍ່ຄວາມສ່ຽງໃນການຂາດແຄນ ແລະ ເພີ່ມຂຶ້ນຂອງລາຄານໍ້າມັນເຊື້ອໄຟ ເພື່ອຮັບປະກັນການສະໜອງນໍ້າມັນໃຫ້ພຽງພໍ, ປ້ອງກັນແລະແກ້ໄຂການກັກຕຸນ ແລະ ປັບໂຄງສ້າງລາຄາໃຫ້ແທດເໝາະກັບສະພາບຕົວຈິງ; ຮີບຮ້ອນຄົ້ນຄວ້າກໍານົດທາງເລືອກໃນການລົງທຶນກໍ່ສ້າງທໍ່ສົ່ງນໍ້າມັນຈາກ ສສ.ຫວຽດນາມ ມາ ສປປລາວ ແລ້ວລາຍງານລັດຖະບານໃນເດືອນສິງຫານີ້; ສືບຕໍ່ຊຸກຍູ້ການປະຕິບັດນະໂຍບາຍສົ່ງເສີມການນໍາໃຊ້ລົດໄຟຟ້າ ແລະ ພະລັງງານທົດແທນ ໃຫ້ແຂງແຮງ ເພື່ອຫຼຸດຜ່ອນການນໍາໃຊ້ນໍ້າມັນເຊື້ອໄຟ; ເອົາໃຈໃສ່ຕິດຕາມກວດກາຄວາມປອດໄພຂອງເຂື່ອນ ແລະ ບໍລິຫານຈັດການນໍ້າໃນເຂື່ອນ, ສ້າງແຜນຮັບມືຕໍ່ກັບບັນຫາໄຟຟ້າຕົກ-ໄຟຟ້າດັບທີ່ອາດຈະເກີດຂຶ້ນ; ປັບປຸງແກ້ໄຂບັນຫາສາຍໄຟຟ້າ, ໝໍ້ແປງ, ສາຍເຄເບີນ ທີ່ມີອາຍຸການໃຊ້ງານຫຼາຍປີ ເພື່ອປ້ອງກັນການເກີດອັກຄີໄພ.

4. ສືບຕໍ່ສຸມໃສ່ສ້ອມແປງບັນດາເສັ້ນທາງຫຼວງແຫ່ງຊາດ ແລະ ເສັ້ນທາງຫຼວງທ້ອງຖິ່ນ ທີ່ອາດໄດ້ຮັບຜົນກະທົບຈາກໄພພິບັດທາງທໍາມະຊາດ, ເດັດຂາດບໍ່ໃຫ້ການສັນຈອນຖືກຕັດຂາດ ແລະ ກໍ່ສ້າງບັນດາເສັ້ນທາງທີ່ກໍານົດໃນແຜນແລ້ວໃຫ້ມີຄວາມຄືບໜ້າໄວ.

5. ສືບຕໍ່ສຸມໃສ່ຊຸກຍູ້ການຜະລິດລະດູຝົນ, ຕິດຕາມເຝົ້າລະວັງ ແລະ ແຈ້ງໃຫ້ຊາວກະສິກອນກະກຽມຮັບມືກັບສະພາບການປ່ຽນແປງດິນຟ້າອາກາດ, ພະຍາດພືດ-ສັດ ທີ່ອາດຈະກະທົບຕໍ່ການຜະລິດຂອງປະຊາຊົນ.

6. ສືບຕໍ່ກະກຽມຈັດການສອບເສັງຄັດເລືອກເອົານັກສຶກສາເຂົ້າຮຽນ ໃນສົກສຶກສາ 2026-2027 ແລະປຸກລະດົມ, ສ້າງເງື່ອນໄຂທີ່ເອື້ອອໍານວຍໃຫ້ລູກຫຼານ ສາມາດເຂົ້າເຖິງການສຶກສາທີ່ມີຄຸນນະພາບ, ກະກຽມເປີດສົກຮຽນໃໝ່ໃນທຸກຊັ້ນຮຽນ, ພ້ອມທັງແກ້ໄຂບັນຫາການປະລະການຮຽນ ແລະ ສົ່ງເສີມວຽກງານກິລາ ໃຫ້ມີຄວາມເຂັ້ມແຂງ ເພື່ອກຽມຄວາມພ້ອມເຂົ້າຮ່ວມການແຂ່ງຂັນລະດັບຕ່າງໆ.

7. ສືບຕໍ່ພັດທະນາສີມືແຮງງານໃຫ້ມີຄຸນນະພາບ, ສະໜອງແຮງງານໃຫ້ພຽງພໍກັບຄວາມຕ້ອງການ, ຄຸ້ມຄອງການເຄື່ອນຍ້າຍແຮງງານເຂົ້າ-ອອກຕາມດ່ານຕ່າງໆ ໃນຂອບເຂດທົ່ວປະເທດ.

8. ສືບຕໍ່ຊຸກຍູ້ສົ່ງເສີມ ແລະ ດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດ, ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂະໜາດໃຫຍ່ທີ່ໄດ້ຮັບອະນຸຍາດສໍາປະທານ ໃຫ້ດໍາເນີນໄປຕາມກົດໝາຍ, ລະບຽບການ ແລະ ສັນຍາກໍານົດໄວ້.

9. ສືບຕໍ່ຕິດຕາມເຝົ້າລະວັງ, ປ້ອງກັນ ແລະ ແກ້ໄຂການລະບາດຂອງພະຍາດຕາມລະດູການ ທີ່ຈະກະທົບຕໍ່ສຸຂະພາບ, ຊີວິດການເປັນຢູ່ຂອງປະຊາຊົນ; ສືບຕໍ່ປັບປຸງຍົກລະດັບຄຸນນະພາບການບໍລິການ, ການຫັນເປັນທັນສະໄໝ ແລະ ການຄຸ້ມຄອງການບໍລິການຂອງໂຮງໝໍເອກະຊົນ ໃຫ້ຮັດກຸມ.

10. ສືບຕໍ່ສຸມໃສ່ແກ້ໄຂບັນຫາທີ່ຕິດພັນກັບຂົງເຂດວັດທະນະທໍາ ແລະ ການທ່ອງທ່ຽວ ໃຫ້ເຂັ້ມງວດກວ່າເກົ່າ ເປັນຕົ້ນ ບັນຫາປ້າຍໂຄສະນາ, ສຽງເນືອງນັນເກີນຂອບເຂດ ແລະ ປາກົດການຫຍໍ້ທໍ້ຕ່າງໆທີ່ມັກເກີດຂຶ້ນ.

11. ໃຫ້ແຕ່ລະກະຊວງ-ອົງການທຽບເທົ່າເປັນເຈົ້າການລົງຮາກຖານຊ່ວຍແຂວງ ຕາມຂໍ້ຕົກລົງເລກທີ 27/ນຍ, ລົງວັນທີ 20 ເມສາ 2026.

12. ສຸມໃສ່ຈັດຕັ້ງຜັນຂະຫຍາຍຜົນບັນດາກອງປະຊຸມ, ຜົນການເຄື່ອນໄຫວວຽກງານຕ່າງປະເທດຂອງການນໍາພັກ-ລັດ, ຂອບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ໃຫ້ເປັນຮູບປະທໍາຫຼາຍຂຶ້ນ; ກະກຽມຮອບດ້ານໃຫ້ແກ່ການເຄື່ອນໄຫວຕ່າງປະເທດຂອງການນໍາຂັ້ນສູງ ແລະ ການຕ້ອນຮັບຄະນະຜູ້ແທນຕ່າງປະເທດຕ່າງໆ ທີ່ຈະມາຢ້ຽມຢາມ ສປປລາວ.

13. ໃຫ້ບັນດາກະຊວງ-ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ສັງລວມກ່ຽວກັບການຈັດຕັ້ງປະຕິບັດທິດຊີ້ນໍາຂອງລັດຖະບານ ຕາມມະຕິ, ຄໍາສັ່ງ, ແຈ້ງການຕ່າງໆ ໃນໄລຍະເດືອນມິຖຸນາ ຫາເດືອນກໍລະກົດ 2026 ແລ້ວລາຍງານໃຫ້ ຫສນຍ ເພື່ອສັງລວມລາຍງານທ່ານນາຍົກລັດຖະມົນຕີ, ບັນດາທ່ານຮອງນາຍົກລັດຖະມົນຕີຜູ້ຊີ້ນໍາ ໄດ້ຮັບຊາບ ແລະ ມີທິດຊີ້ນໍາ.

14. ສຸມໃສ່ກະກຽມຮ່າງກົດໝາຍຕ່າງໆທີ່ຈະນໍາເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ X ໃຫ້ຮັບປະກັນທາງດ້ານເນື້ອໃນ ແລະ ທ່ວງທັນເວລາ.

15. ໃຫ້ກະຊວງກ່ຽວຂ້ອງ ສືບຕໍ່ກະກຽມ ແລະ ປັບປຸງເອກະສານທີ່ຈະລາຍງານຕໍ່ກອງປະຊຸມກົມການເມືອງສູນກາງພັກ ໃນຕົ້ນເດືອນສິງຫານີ້.

ໃນຕອນທ້າຍ, ທ່ານນາຍົກລັດຖະມົນຕີ ໄດ້ຮຽກຮ້ອງມາຍັງບັນດາທ່ານສະມາຊິກລັດຖະບານ ຈົ່ງນໍາເອົາແຜນວຽກຈຸດສຸມປະຈໍາເດືອນສິງຫາທີ່ກອງປະຊຸມໄດ້ເອກະພາບກັນໄປປັບປຸງເຂົ້າໃນແຜນວຽກຂອງຂະແໜງການຕົນ ໃຫ້ລະອຽດ, ມີການແບ່ງຄວາມຮັບຜິດຊອບໃຫ້ການຈັດຕັ້ງ, ບຸກຄະລາກອນແຕ່ລະຂັ້ນ ແລະ ມີຄາດໝາຍເວລາສໍາເລັດຊັດເຈນ, ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະຂະແໜງການ.

**(ກົມປະຊາສໍາພັນ, ຫສນຍ)**



## ເປີດຂະບວນການ...

(ຕໍ່ຈາກໜ້າ 1)

ຢ່າງພ້ອມພຽງ.

ໃນພິທີ ໄດ້ຮັບຟັງການລາຍງານແຜນການເຄື່ອນໄຫວວຽກງານຂະບວນການ ຈາກສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສູນກາງພັກ, ຄະນະປະຈຳພັກສະພາແຫ່ງຊາດ, ຮອງຫົວໜ້າຄະນະຮັບຜິດຊອບວຽກງານຂະບວນການ; ຈາກນັ້ນ, ສະຫາຍ ມອນໄຊ ລາວມົວຊົ່ງ ໄດ້ກ່າວເປີດຂະບວນການຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ ຢ່າງເປັນທາງການ ເຊິ່ງສະຫາຍໄດ້ຮຽກຮ້ອງໃຫ້ພ້ອມກັນຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ ເຂົ້າໃນການນຳພາ-ຊີ້ນຳການຈັດຕັ້ງປະຕິບັດຂະບວນການຕ່າງໆ ໂດຍຕິດພັນກັບການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງມະຫາຊົນສະພາແຫ່ງຊາດ ແລະ ຈັບມືແຂ່ງຂັນກັນ ສ້າງຂະບວນການຂອງຕົນ ໃຫ້ເປັນຂະບວນຟົດຟື້ນ ໂດຍສຸມໃສ່ວຽກງານຂະບວນການສຶກສາອົບຮົມການເມືອງ-ແນວຄິດ, ວຽກງານຂະບວນການກໍ່ສ້າງພັກ, ວຽກງານຂະບວນການປະຕິບັດນະໂຍບາຍ, ວຽກງານຂະບວນການປ້ອງກັນຄວາມສະຫງົບ, ວຽກງານຂະບວນການອອກແຮງງານ, ກິລາ ແລະ ສິລະປະວັນນະຄະດີ ແລະ ວຽກງານຂະບວນການໂຄສະນາ.






ພ້ອມນັ້ນ, ຍັງໄດ້ຮັບຟັງການເລົ່າປະຫວັດຕົ້ນກຳເນີດ ແລະ ການຂະຫຍາຍຕົວຂອງສະຫະພັນແມ່ຍິງລາວຄົບຮອບ71 ປີ (20 ກໍລະກົດ 1955-20 ກໍລະກົດ 2026); ການສະຫຼຸບຕີລາຄາຜົນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ແລະ ແຜນການຈັດຕັ້ງປະຕິບັດໃນຕໍ່ໜ້າ; ຜ່ານຂໍ້ຕົກລົງສະບັບເລກທີ 133/ສສຍລ ຂອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງ ວ່າດ້ວຍການຍ້ອງຍໍສະຫະພັນແມ່ຍິງສະພາແຫ່ງຊາດ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ສະໄໝທີ VIII (2021-2025); ພ້ອມທັງມອບການຍ້ອງຍໍຜົນງານ ແລະເປີດຂະບວນການແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງສະພາແຫ່ງຊາດ (2026-2027) ຢ່າງເປັນທາງການ.

ຄຽງຄູ່ກັບພິທີທາງການ ຍັງໄດ້ມີກິດຈະກຳ ຈັດງານຕະຫຼາດນັດຂາຍສິນຄ້າ, ຜະລິດຕະພັນ, ອາຫານ ແລະ ຜົນລະປູກຂອງສະຫະພັນແມ່ຍິງສະພາແຫ່ງຊາດ ຢ່າງເປັນຂະບວນຟົດຟື້ນ.

---

ອາດ ກະວີລາວ

## ຍິງລາວສາວເດັ່ນ

# ລູກທາດສາມປາງ

❈ ຍິງລາວດັ່ງເດັ່ນກ້າ ລືຊ່າຊານໄຊ
ຊື່ສຽງໂດ່ງຂະໂຍງໄກ ເກັ່ງງາມຄົນຍ້ອງ
ຜິວຜ່ອງພັນເໝືອນແຕ້ມ ແນມນຳເກີນຄ່ອງ
ຍາມເມື່ອຫຼິ້ງລຳຈ້ອງ ເຫັນນ້ອງຄ່ຽມຄົມ

❈ ມວຍຜົມດຳແຕ່ງເກົ້າ ສະໄບບ່ຽງແພໄໝ
ເດັ່ນລະໄມແພວພາວ ນຸ່ງງາມຊິງເອ້
ສຸດສະເໜຫາຮູ້ ຍິງລາວດູສະຫງ່າ
ວາຈານວນອິ່ນອ້ອຍ ຫວານຈ້ອຍມ່ວນຫູ

❈ ຄວາມຮູ້ສູງສິ່ງພົ້ນ ທຽມບ່າວຊາຍສະກັນ
ເປັນນາຍພັນຫຼາຍຄົນ ດັ່ງດຽວສະເໝີໜ້າ
ວິຊາການເຕັມຂັ້ນ ແວວໄວຂັນແຂ່ງ
ແຊງຊ່ວງຊາຍເລັ່ງດົ້ນ ຫັນຫ້າວດຸ່ງກາຍ

❈ ວຽກຈັບບາຍກໍ່ສ້າງ ຫຼາຍຢ່າງຍິງທຳ
ເປັນການນຳພາພັກ ມາກມາຍຍິງພ້ອມ
ຄຽງຂ້າງຊາຍດອມເຂົ້າ ໜັກເບົາຊວ້ານຊ່ວຍ
ຍິງຂຶ້ນຂວາຍກົ່ນໄງ້ ໃຈກ້າເກັ່ງຫານ

❈ ວຽກເຮືອນຊານຄ່ອງແຄ້ວ ເຮັດຢູ່ກະທຳກິນ
ບໍ່ຂອດຄາເຄືອງຂືນ ຊຸ່ອັນເຖິງເທົ້າ
ເວົ້າມ່ວນງາມຮອຍຍິ້ມ ຄື້ນມາຢາມແວ່
ເຫັນແລ້ວຍໍຍິ່ງແທ້ ແຍງຍ້ອງວ່າດີ... ແທ້ແລ້ວ!

❈ ສະຕີລາວເອກອ້າງ ຍຸກໃໝ່ຮຽນສູງ
ຮຸ່ງປັນຍາຄົມແຫຼມ ເກັ່ງງາມແກມກ້າ
ການສຶກສາໂຫຊົ້ນ ປະລິນຍາເອກໃຫຍ່
ມີພົບໄຫວກັ່ນກ້າວ ກຽນກ້ອງວ່ອງໄວ

❈ ຖືວິໄນເຄັ່ງຂໍ້ ວຽກດ່ວນທັນການ
ງານສຳຄັນຍິງລຸຍ ຕໍ່ເຕີມຕາມຕ້ອຍ
ຮີດຄອງລາວແຂນຫ້ອຍ ປະເພນີດູເດັ່ນ
ສິນທຳເປັນທີ່ຈັ້ງ ວາງໄວ້ຫວ່າງໃຈ... ງາມເດ!

---

## ຟ້າຍາຍ ລະບາຍ



(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມຫ້ຽນ

❈ **ອາ**ທິດທີ່ຜ່ານມາ ສະຫະພັນແມ່ຍິງສະພາແຫ່ງຊາດໄດ້ຈັດງານຕະຫຼາດນັດວາງສະແດງສິນຄ້າເພື່ອເປັນການສ້າງຂະບວນການຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ ແລະ ເພື່ອສະເຫຼີມສະຫຼອງວັນແມ່ຍິງລາວ ຄົບຮອບ **71 ປີ** ມີການຂາຍສິນຄ້າ ຜະລິດຕະພັນຂອງຫຼາຍຢ່າງ ວາງສະແດງໄວ້ໃຫ້ທ່ານຈັບຈ່າຍເລືອກຊື້ ທັງສິ້ນຜ້າແພຝ້າຍໄໝນີ້ງາມຍິ່ງ ທັງຂອງກິນເຄື່ອງໃຊ້ ໃຫ້ທ່ານໄດ້ຢ້ຽມຊົມ **ສະອອນເດ!**

❈ **ວັນ**ທີ 29 ກໍລະກົດ ແມ່ນມື້ບຸນເຂົ້າພັນສາຕາມຮີດ 12 ຄອງ 14 ເຊິ່ງຖືວ່າເປັນງານບຸນໃຫຍ່ຂອງພະສົງອົງຄະເຈົ້າ ເພື່ອເຂົ້າສູ່ການຈຳພັນສາໃນຊ່ວງລະດູຝົນ ເຊີນທຸກຄົນຮ່ວມສ້າງບຸນໃຫຍ່ເປັນກຸສົນ ພາວະນາຖືສິນ ຊ່ວງພັນສານີ້ ບໍ່ເມົາມົວຫາມົ້ວ ແນວບໍ່ດີຖອຍຫ່າງ ທຳຄວາມດີສືບສ້າງ ປະດັບເອົາຄູ່ກາຍ **ພີ່ນ້ອງເອີຍ!**

## ຊວນຍິ້ມ

# ພົ້ງຄຶງ

### ເລື່ອງ: ຂ້ອຍຮູ້ແລ້ວ

ມີຊາຍຄົນໜຶ່ງກຳລັງຊິຕາຍ ໄດ້ເວົ້າກັບເມຍທີ່ນັ່ງເຝົ້າຢູ່ວ່າ:

**ຜົວ:** ເມຍເອີຍ... ຂ້ອຍຄືຊິບໍ່ລອດແລ້ວ!!! ຂ້ອຍມີເລື່ອງສາລະພາບ, ຂ້ອຍບໍ່ຢາກຕາຍແບບຄ້າງຄາ

**ເມຍ:** ໂອ້ຍ... ຜົວເອີຍ ເຈົ້າມີເລື່ອງອັນໃດຄ້າງຄາເດ ເວົ້າກັບກັບຂ້ອຍໄດ້, ບໍ່ເປັນຫຍັງດອກ

**ຜົວ:** ຂ້ອຍຫຼິ້ນຊູ້ກັບນ້ອງເຈົ້າ ໝູ່ເຈົ້າ ແລະ ເລຂາ...

**ເມຍ:** ຂ້ອຍຮູ້ແລ້ວ, ເຈົ້າຈຶ່ງເປັນແບບນີ້; ເຈົ້າສະບາຍໃຈໄດ້ ບໍ່ມີຫຍັງໃຫ້ຄ້າງຄາແລ້ວ

**ຜົວ:** ???

## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

"ຄິດເບິ່ງດິນກັບຟ້າ ແສນໄກໄກກັນ
ໝອກຍອນຍ້ອຍລົງ ກໍ່ຍັງເຖິງດິນໄດ້
ທະເລໃຫຍ່ກວ້າງ ສັງຂະຫຍາແສນຍ່ານ
ຄົນຍັງເດີນດຸ່ງດົ້ນ ໄກລ້າກໍ່ຈອດເຖິງ"

ລັດຖະສະພາຕ່າງປະເທດ

## ປະທານາທິບໍດີຮົງກາລີ ລົງນາມກົດໝາຍ ຢຸດຕິການດຳລົງຕຳແໜ່ງປະມຸກລັດ

(Reuters) - ຕາມາສ ຊູລຢ໊ອກ (Tamas Sulyok) ປະທານາທິບໍດີຮົງກາລີ ໄດ້ລົງນາມໃນກົດໝາຍທີ່ຮັບຮອງການປັບປຸງລັດຖະທຳມະນູນ ເຊິ່ງຜ່ານການອະນຸມັດໂດຍພັກ Tisza ຂອງນາຍົກລັດຖະມົນຕີ ປີເຕີ ມາກຢາ (Peter Magyar) ເຊິ່ງຢຸດຕິວາລະການດຳລົງຕຳແໜ່ງຂອງເຂົາໃນຖານະປະມຸກແຫ່ງລັດ, ຊູລຢ໊ອກ ກ່າວໃນຖະແຫຼງການເມື່ອວັນເສົາທີ 18 ກໍລະກົດ 2026.

ກົດໝາຍດັ່ງກ່າວ ແມ່ນສ່ວນໜຶ່ງໃນຄວາມພະຍາຍາມຂອງ ມາກຢາ ທີ່ຕ້ອງການໂຄ່ນລົ້ມຖານອຳນາດຂອງອະດີດນາຍົກລັດຖະມົນຕີ ວິກເຕີ ອໍບານ (Viktor Orban) ເຊິ່ງ ມາກຢາ ກ່າວວ່າຕົນໄດ້ຮັບມອບໝາຍໂດຍຜູ້ມີສິດເລືອກຕັ້ງ ຫຼັງຈາກເອົາຊະນະ ອໍບານ ຢ່າງຖ້ວມທົ້ນໃນການເລືອກຕັ້ງເມື່ອເດືອນເມສາຜ່ານມາ.

ການປັບປຸງລັດຖະທຳມະນູນຂ້າງເທິງ ຈະຢຸດຕິການດຳລົງຕຳແໜ່ງປະທານາທິບໍດີຂອງ ຊູລຢ໊ອກ ໃນທັນທີ ໂດຍອ້າງເຖິງ "ການສູນເສຍຄວາມໝັ້ນໃຈຢ່າງຮ້າຍແຮງ" ຂອງສັງຄົມ ຕໍ່ຜູ້ນຳທີ່ໄດ້ຮັບເລືອກຕັ້ງໃນຕົ້ນປີ 2024 ໂດຍສະມາຊິກສະພານິຕິບັນຍັດຈາກພັກ Fidesz ຂອງ ອໍບານ.

ເຖິງແມ່ນຊູລຢ໊ອກກ່າວວ່າ ຕົນບໍ່ມີທາງເລືອກອື່ນນອກຈາກລົງນາມຮັບຮອງກົດໝາຍສະບັບນີ້ ເນື່ອງຈາກສອດຄ່ອງຕາມກົດໝາຍ; ຢ່າງໃດກໍຕາມ, ອະດີດຜູ້ພິພາກສາສານລັດຖະທຳມະນູນເຕືອນວ່າ ການປະຕິຮູບຄັ້ງນີ້ ໄດ້ທຳລາຍຫຼັກນິຕິທຳໃນຮົງກາລີ.

ຊູລຢ໊ອກ ກ່າວຕື່ມວ່າ "ການປັບປຸງລັດຖະທຳມະນູນຄັ້ງທີ 17 ຖືເປັນຈຸດປ່ຽນໃນລະບອບປະຊາທິປະໄຕຕາມລັດຖະທຳມະນູນຂອງຮົງກາລີແລະການຖອດຖອນຜູ້ດຳລົງຕຳແໜ່ງທາງການເມືອງດ້ວຍວິທີການທີ່ລະເມີດຫຼັກນິຕິທຳຢ່າງເປີດເຜີຍ ເປັນການສ້າງແບບຢ່າງທີ່ບໍ່ດີ ເຊິ່ງສ້າງບາດແຜເລິກຕໍ່ຄຸນຄ່າທາງລັດຖະທຳມະນູນຂອງປະຊາທິປະໄຕ, ການແບ່ງອຳນາດ ແລະ ຫຼັກນິຕິທຳ".

ນັບຕັ້ງແຕ່ ອໍບານ ຖືກໂຄ່ນລົ້ມໃນເດືອນເມສາ, ມາກຢາ ກໍຮຽກຮ້ອງຫຼາຍຄັ້ງໃຫ້ ຊູລຢ໊ອກ ລາອອກຈາກຕຳແໜ່ງ, ໂດຍ ມາກຢາ ກ່າວຫາວ່າ ຊູລຢ໊ອກ ບໍ່ສາມາດເປັນຕົວແທນຄວາມສາມັກຄີຂອງຊາດໃນບັນຫາສຳຄັນຕ່າງໆ ແລະ ດຳລົງຕຳແໜ່ງເພື່ອຜົນປະໂຫຍດຂອງ ອໍບານແລະລັດຖະບານຂອງເຂົາ.



ມາກຢາ (ຊ້າຍ), ຊູລຢ໊ອກ (ຂວາ)

## Bangladesh ຜ່ານຮ່າງກົດໝາຍຕ້ານຢາເສບຕິດ ພ້ອມໂທດປະຫານຊີວິດສຳລັດການຄ້າຢາເສບຕິດອອນລາຍ

(Xinhua) - ສະພາແຫ່ງຊາດບັງກລາເທດ ໄດ້ຜ່ານຮ່າງກົດໝາຍຄວບຄຸມຢາເສບຕິດ ທີ່ຍັງຄົງມີໂທດປະຫານຊີວິດສຳລັບການຄ້າຢາເສບຕິດຜິດກົດໝາຍທີ່ດຳເນີນການຜ່ານທາງອິນເຕີເນັດ, ພ້ອມທັງສະເໜີມາດຕະການໃໝ່ເພື່ອຕໍ່ສູ້ກັບຄວາມຜິດທີ່ຂັບເຄື່ອນດ້ວຍເຕັກໂນໂລຊີ.

ຊາລາຮຸດດິນ ອາເໝັດ (Salahuddin Ahmed) ລັດຖະມົນຕີກະຊວງພາຍໃນ ໄດ້ສະເໜີຮ່າງກົດໝາຍຄວບຄຸມຢາເສບຕິດ ສະບັບປັບປຸງປີ 2026 ຕໍ່ສະພາແຫ່ງຊາດ ເມື່ອວັນຈັນທີ 13 ກໍລະກົດນີ້ ເຊິ່ງໄດ້ຮັບການອະນຸມັດດ້ວຍການລົງຄະແນນສຽງສ່ວນຫຼາຍ.

ກົດໝາຍສະບັບນີ້ ຍັງຄົງມີໂທດປະຫານຊີວິດເປັນໂທດສູງສຸດສຳລັບການຄ້າຢາເສບຕິດທາງອອນລາຍແລະຂະຫຍາຍຂອບກົດໝາຍເພື່ອຮັບມືກັບວິທີການກະຈາຍຢາເສບຕິດແບບດິຈິຕອນທີ່ເກີດຂຶ້ນໃໝ່; ການປັບປຸງດັ່ງກ່າວ ກຳນົດໃຫ້ການໃຊ້ໂລກໄຊເບີ, ອຸປະກອນດິຈິຕອນ, ສື່ສັງຄົມ ແລະ ເວທີອອນລາຍອື່ນໆ ສຳລັບທຸລະກຳໃດໆທີ່ກ່ຽວຂ້ອງກັບຢາເສບຕິດຜິດກົດໝາຍ ຫຼື ສານທີ່ມີຜົນຕໍ່ຈິດປະສາດ ເປັນຄວາມຜິດທາງອາຍາ.

ກົດໝາຍສະບັບນີ້ ຍັງຫ້າມການນຳໃຊ້ການຊຳລະເງິນດິຈິຕອນ, ກະເປົ໋າເງິນອີເລັກໂຕຣນິກ, ຊັບສິນສະເໝືອນຈິງ (virtual asset) ແລະ ສະກຸນເງິນດິຈິຕອນ ສຳລັບກິດຈະກຳດັ່ງກ່າວ.

ກົດໝາຍລະບຸວ່າ ການຢຶດຢາເສບຕິດໂດຍກົງຈາກຜູ້ຕ້ອງສົງໄສ ບໍ່ແມ່ນຂໍ້ກຳນົດທີ່ຈຳເປັນສຳລັບການຕັດສິນລົງໂທດ.

ການກະທຳຜິດດັ່ງກ່າວມີໂທດຕັ້ງແຕ່ຕັດອິດສະລະພາບໄປຈົນເຖິງປະຫານຊີວິດ, ລວມທັງປັບໃໝສູງສຸດ 5 ລ້ານຕາກາ (taka) ປະມານ 41 ພັນໂດລາ.

ກົດໝາຍສະບັບປັບປຸງໃຫ້ອຳນາດແກ່ກົມຄວບຄຸມຢາເສບຕິດ ໃນການສ້າງຕັ້ງໜ່ວຍໜາດົມກົ່ນ ແລະ ອະນຸຍາດໃຫ້ເຈົ້າໜ້າທີ່ຖືອາວຸດປືນ; ກົດໝາຍຍັງເປີດທາງໃຫ້ແກ່ການສ້າງຕັ້ງສານພິເສດເພື່ອພິຈາລະນາຄະດີອາຊະຍາກຳຢາເສບຕິດໃນເຂດທີ່ມີຄວາມສ່ຽງສູງ, ນອກຈາກສານປົກກະຕິ.

ໃນການຕອບຂໍ້ກ່າວຫາທີ່ວ່າເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍບາງຄົນມີສ່ວນຮ່ວມໃນການຄ້າຢາເສບຕິດ, ອາເໝັດ ກ່າວໃນລະຫວ່າງການກ່າວປາໄສໃນສະພາແຫ່ງຊາດວ່າ ຈະມີມາດຕະການທາງບໍລິຫານຕໍ່ຜູ້ທີ່ຖືກຕັດສິນວ່າມີຄວາມຜິດ ແລະ ຈະບໍ່ມີໃຜໄດ້ຮັບການຍົກເວັ້ນ.



## Ireland ອະນຸມັດສ້າງຕັ້ງລະບົບຂຶ້ນທະບຽນ ຜູ້ກະທຳຜິດຄະດີຄວາມຮຸນແຮງໃນຄອບຄົວ



(CNN) - ວັນທີ 15 ກໍລະກົດ 2026 ສະພາຕໍ່າອຽກລັງໄດ້ອະນຸມັດກົດໝາຍສຳຄັນ ເພື່ອສ້າງຕັ້ງທະບຽນສາທາລະນະຜູ້ກະທຳຜິດດ້ານຄວາມຮຸນແຮງໃນຄອບຄົວ ເປັນຄັ້ງທຳອິດຂອງປະເທດ. ກົດໝາຍດັ່ງກ່າວຊື່ວ່າ "ກົດໝາຍເຈນນີ" ຫຼື ກົດໝາຍທະບຽນຄຳຕັດສິນຄະດີຄວາມຮຸນແຮງໃນຄອບຄົວ (Domestic Violence Judgments Register Bill) ໂດຍຕັ້ງຊື່ເພື່ອເປັນການລະລຶກເຖິງ ເຈນນິເຟີ ພູລ (Jennifer Poole) ອາຍຸ 24 ປີ ເຊິ່ງເປັນແມ່ຂອງລູກສອງຄົນ ໄດ້ເສຍຊີວິດເມື່ອເດືອນເມສາ 2021 ຫຼັງຈາກຖືກອະດີດຜົວຄາດຕະກຳ; ຜົນການສືບສວນຢ່າງລະອຽດພົບວ່າ ພູລ ບໍ່ເຄີຍຮູ້ມາກ່ອນວ່າອະດີດຜົວຂອງນາງ ມີປະຫວັດທຳຮ້າຍຮ່າງກາຍແມ່ຍິງ, ລວມທັງເຄີຍຖືກສານຕັດສິນວ່າມີຄວາມຜິດໃນການທຳຮ້າຍຮ່າງກາຍອະດີດຄູ່ຮັກກ່ອນແຕ່ງງານກັບ ພູລ.

ທະບຽນອອນລາຍນີ້ຈະເຜີຍແຜ່ລາຍຊື່ບຸກຄົນທີ່ຖືກຕັດສິນວ່າມີຄວາມຜິດໃນຄະດີຄວາມຮຸນແຮງໃນຄອບຄົວທີ່ຮ້າຍແຮງ ເຊັ່ນ: ການຂົ່ມຂືນ, ການລ່ວງລະເມີດທາງເພດ, ການບີບຄໍທີ່ບໍ່ເຮັດໃຫ້ເສຍຊີວິດ, ການລົບກວນ, ການຄວບຄຸມທາງຈິດໃຈ ແລະ ການເຜີຍແຜ່ຮູບພາບ ຫຼື ຂໍ້ມູນສ່ວນຕົວທາງເພດ ໂດຍບໍ່ໄດ້ຮັບອະນຸຍາດ.

ເຖິງວ່າທະບຽນດັ່ງກ່າວຈະເປີດໃຫ້ສາທາລະນະຊົນເຂົ້າເຖິງ, ແຕ່ຈະມີຂໍ້ຈຳກັດ ເນື່ອງຈາກຜູ້ພິພາກສາທີ່ພິຈາລະນາຄະດີ ຈະມີສິດອຳນາດຕັດສິນໃຈວ່າຄວນເຜີຍແຜ່ຂໍ້ມູນຫຼືບໍ່ ໂດຍອີງໃສ່ລາຍລະອຽດຂອງແຕ່ລະຄະດີ ແລະ ຈະມີການເຜີຍແຜ່ຊື່ຜູ້ກະທຳຜິດດ້ວຍການຍິນຍອມຂອງຜູ້ເຄາະຮ້າຍເທົ່ານັ້ນ; ລາຍຊື່ທີ່ເຜີຍແຜ່ ຈະປະກອບມີລາຍລະອຽດຂອງການກະທຳຜິດ ແລະ ການລົງໂທດ, ແລະ ຈະຖືກເກັບໄວ້ໃນເວັບໄຊຂອງຫ້ອງການສານ.

ຕາມກົດໝາຍສະບັບນີ້, ຜູ້ກະທຳຜິດສາມາດຍື່ນຄຳຮ້ອງຂໍໃຫ້ລຶບຊື່ຂອງຕົນອອກຈາກທະບຽນ ຫຼັງຈາກພົ້ນໄລຍະເວລາຢ່າງໜ້ອຍ 3 ປີ ນັບຈາກວັນທີ່ຖືກຕັດສິນວ່າມີຄວາມຜິດ.

ອົງການເພື່ອແມ່ຍິງແຫ່ງສະຫະປະຊາຊາດ (UN Women) ລາຍງານວ່າ ທົ່ວໂລກມີແມ່ຍິງ ແລະ ເດັກຍິງ 83,000 ຄົນ ຖືກຄາດຕະກຳໂດຍເຈດຕະນາ ເມື່ອປີ 2024 ເຊິ່ງເປັນຂໍ້ມູນລ່າສຸດ ໃນນີ້, 60% ຫຼືເກືອບ 50,000 ຄົນ ຖືກຂ້າໂດຍຄູ່ຮັກ ຫຼື ສະມາຊິກໃນຄອບຄົວ.

# ສະພາຝຣັ່ງ ອະນຸມັດຮ່າງກົດໝາຍອະນຸຍາດໃຫ້ຄົນເຈັບໄລຍະສຸດທ້າຍ ຢຸດຕິຊີວິດພາຍໃຕ້ເງື່ອນໄຂ



(REUTERS) - ວັນທີ 15 ກໍລະກົດນີ້, ສະພາແຫ່ງຊາດຝຣັ່ງ ໄດ້ອະນຸມັດຮ່າງກົດໝາຍທີ່ຈະອະນຸຍາດໃຫ້ຜູ້ໃຫຍ່ທີ່ທຸກທໍລະມານຈາກພະຍາດທີ່ບໍ່ສາມາດປິ່ນປົວໄດ້ໄດ້ຮັບການຊ່ວຍເຫຼືອທາງການແພດເພື່ອຢຸດຕິຊີວິດພາຍໃຕ້ເງື່ອນໄຂທີ່ກໍານົດ, ນີ້ໝາຍເຖິງຈຸດຈົບຂອງການໂຕ້ຖຽງດ້ານຈັນຍາບັນ ແລະ ການເມືອງທີ່ຮຸນແຮງ.

ກົດໝາຍສະບັບນີ້ ຈະອະນຸຍາດໃຫ້ບຸກຄົນທີ່ຮ້ອງຂໍໄດ້ຮັບສານພິດເພື່ອຈົບຊີວິດຕົນເອງພາຍໃຕ້ເງື່ອນໄຂທີ່ເຂັ້ມງວດ ເຊິ່ງບຸກຄົນນັ້ນອາດໃຊ້ສານພິດດ້ວຍຕົນເອງ ຫຼື ອາດດໍາເນີນການໂດຍທ່ານໝໍຫຼືພະຍາບານ; ຫາກບຸກຄົນດັ່ງກ່າວບໍ່ສາມາດເຮັດໄດ້ດ້ວຍຕົນເອງ, ທ່ານໝໍ ຫຼື ພະຍາບານ ສາມາດເປັນຜູ້ໃຫ້ຢາໄດ້.

ການເຂົ້າເຖິງການຈົບຊີວິດແບບຮັບການຊ່ວຍເຫຼືອ ຈະຈໍາກັດສະເພາະຜູ້ໃຫຍ່ທີ່ເປັນພົນລະເມືອງຝຣັ່ງ ຫຼື ຜູ້ຢູ່ອາໄສຢ່າງຖືກຕ້ອງຕາມກົດໝາຍໃນຝຣັ່ງ ແລະ ເປັນພະຍາດຮ້າຍແຮງທີ່ບໍ່ສາມາດປິ່ນປົວໃຫ້ຫາຍຂາດໄດ້ ເຊິ່ງເປັນອັນຕະລາຍຕໍ່ຊີວິດແລະຢູ່ໃນໄລຍະຂັ້ນສູງ ຫຼື ໄລຍະສຸດທ້າຍ ລວມເຖິງປະສົບກັບຄວາມທຸກທໍລະມານທາງຮ່າງກາຍ ແລະຈິດໃຈຢ່າງຕໍ່ເນື່ອງທີ່ກ່ຽວຂ້ອງກັບພະຍາດດັ່ງກ່າວ ແລະ ຄົນເຈັບສາມາດສະແດງການຕັດສິນໃຈເລືອກຢ່າງອິດສະຫຼະ ໂດຍໄດ້ຮັບຂໍ້ມູນທີ່ຄົບຖ້ວນ.

“ໃນເລື່ອງນີ້ ເຊິ່ງເປັນເລື່ອງສ່ວນຕົວ ແລະ ຮ້າຍແຮງ, ແລະກ່ຽວຂ້ອງກັບຊີວິດ, ຄວາມທຸກທໍລະມານ ແລະ ກຽດສັກສີ ມີພຽງວິທີດຽວທີ່ເປັນໄປໄດ້ຄື: ໃຊ້ເວລາໃນການຮັບຟັງ, ມີສ່ວນຮ່ວມໃນການສົນທະນາ ແລະ ຈັດການອະພິປາຍ” ປະທານາທິບໍດີ ເອັມມານູເອວ ມາຄຣົງ ກ່າວຜ່ານເວທີສື່ສັງຄົມ X.

ດ້ານຜູ້ສະໜັບສະໜູນ ກ່າວວ່າ ກົດໝາຍສະບັບນີ້ ຈະເຮັດໃຫ້ຜູ້ທີ່ປະເຊີນກັບຄວາມທຸກທໍລະມານທີ່ບໍ່ສາມາດທົນໄດ້ໃນໄລຍະສຸດທ້າຍຂອງຊີວິດ ມີອິດສະຫຼະ ແລະ ຄວບຄຸມວິທີການເສຍຊີວິດຂອງຕົນເອງໄດ້ຫຼາຍຂຶ້ນ, ໃນຂະນະທີ່ຍັງຄົງມີມາດຕະການຄຸ້ມຄອງທີ່ເຂັ້ມງວດ.

ການຈົບຊີວິດແບບຮັບການຊ່ວຍເຫຼືອ ໄດ້ຮັບອະນຸຍາດໃນຫຼາຍປະເທດໃນເອີຣົບລວມທັງສະວິດ, ແບນຊິກ, ແລະໂຮນລັງ ພາຍໃຕ້ຂອບກົດໝາຍທີ່ແຕກຕ່າງກັນ, ເຊັ່ນດຽວກັນກັບໃນຫຼາຍລັດຂອງສະຫະລັດອາເມລິກາ ທີ່ອະນຸຍາດການຈົບຊີວິດໂດຍຮັບການຊ່ວຍເຫຼືອທາງການແພດສໍາລັບຄົນເຈັບໄລຍະສຸດທ້າຍ.

# ຍີ່ປຸ່ນ ປັບປຸງກົດໝາຍຄອບຄົວຈັກກະພັດ ເປັນຄັ້ງທໍາອິດໃນຮອບ 79 ປີ



(Xinhua) - ລັດຖະສະພາຍີ່ປຸ່ນ ໄດ້ຜ່ານກົດໝາຍຄອບຄົວຈັກກະພັດ ຫຼື ກົດໝາຍລາຊະສໍານັກ (Imperial House Law) ສະບັບປັບປຸງ ເມື່ອວັນສຸກທີ 17 ກໍລະກົດ 2026 ເພື່ອແກ້ໄຂບັນຫາຈໍານວນສະມາຊິກລາຊະວົງທີ່ຫຼຸດລົງ, ເຊິ່ງຖືເປັນການປ່ຽນແປງທີ່ສໍາຄັນຄັ້ງທໍາອິດຂອງກົດໝາຍສະບັບນີ້ ນັບຕັ້ງແຕ່ມີການປະ ກາດໃຊ້ໃນປີ 1947; ກົດໝາຍສະບັບປັບປຸງເຊິ່ງຜ່ານການລົງມະຕິໃນກອງປະຊຸມໃຫຍ່ຂອງສະພາຜູ້ແທນລາດສະດອນ ລວມມີມາດຕະການເພື່ອຮັບປະກັນວ່າມີຈໍານວນສະມາຊິກຄອບຄົວຈັກກະພັດພຽງພໍ ໂດຍອະນຸຍາດໃຫ້ຄອບຄົວຈັກກະພັດຮັບເອົາບຸດບຸນທໍາທີ່ເປັນຊາຍທາງເຊື້ອສາຍບິດາ ຈາກ 11 ສາຂາຂອງຈັກກະພັດໃນອະດີດ ເຊິ່ງສູນເສຍສະຖານະຄອບຄົວຈັກກະພັດໃນປີ 1947.

ກົດໝາຍຄອບຄົວຈັກກະພັດປີ 1947 ມີຜົນບັງຄັບໃຊ້ໃນຂະນະທີ່ປະເທດຢູ່ພາຍໃຕ້ການຍຶດຄອງຂອງສະຫະລັດ ຫຼັງສົງຄາມໂລກຄັ້ງທີ II; ໃນເວລານັ້ນ, ສະມາຊິກ 51 ຄົນຈາກ 11 ສາຂາຂອງຄອບຄົວຈັກກະພັດ ໄດ້ສະຫຼະສະຖານະຂອງພວກເຂົາໂດຍສະໝັກໃຈ ແລະ ກາຍເປັນສາມັນຊົນ.

ການປ່ຽນແປງທາງກົດໝາຍຫຼ້າສຸດ ໄດ້ປູທາງໃຫ້ທາຍາດຊາຍທີ່ຍັງບໍ່ໄດ້ແຕ່ງງານຂອງອະດີດລາຊະວົງ 11 ຕະກູນ ທີ່ສູນເສຍສະຖານະລາດຊະວົງເມື່ອຫຼາຍທົດສະວັດກ່ອນ ເຂົ້າຮ່ວມຄອບຄົວຈັກກະພັດໃນປັດຈຸບັນ ທີ່ມີສະມາຊິກ 16 ຄົນ.

ການປັບປຸງນີ້ ຍັງອະນຸຍາດໃຫ້ສະມາຊິກຍິງຂອງຄອບຄົວຈັກກະພັດ ຮັກສາສະຖານະລາຊະວົງຂອງພວກເຂົາໄວ້ໄດ້ ເຖິງແມ່ນຈະແຕ່ງງານກັບສາມັນຊົນແລ້ວກໍຕາມ; ເຖິງຢ່າງໃດກໍຕາມ, ຄູ່ສົມລົດ ຫຼື ບຸດຂອງພວກເຂົາຈະບໍ່ສາມາດເຂົ້າຮ່ວມຄອບຄົວຈັກກະພັດໄດ້ແລະ ຈະຍັງຄົງເປັນສາມັນຊົນຕໍ່ໄປ.

ຂະນະດຽວກັນ, ການປັບປຸງນີ້ເນັ້ນໜັກເຖິງ “ການສືບທອດທາງເຊື້ອສາຍຊາຍ” ເຊິ່ງເປັນຫຼັກການທີ່ລັດຖະບານ ແລະ ພັກການເມືອງທີ່ກໍາລັງປົກຄອງປະເທດ ສະໜັບສະໜູນ, ໂດຍຫຼີກລ່ຽງບັນຫາທີ່ສ້າງຄວາມແບ່ງແຍກຫຼາຍທີ່ສຸດວ່າ ຄວນອະນຸຍາດໃຫ້ແມ່ຍິງສືບທອດບັນລັງຫຼືບໍ່.

# Guinea ເປີດກອງປະຊຸມສະພາແຫ່ງຊາດຊຸດໃໝ່



(Xinhua) - ກີເນ ໄດ້ເປີດກອງປະຊຸມສະພາແຫ່ງຊາດຊຸດໃໝ່ ທີ່ພະລາຊະວັງປະຊາຊົນໃນນະຄອນຫຼວງໂກນາກຣີ (Conakry) ເມື່ອວັນສຸກທີ 17 ກໍລະກົດ 2026, ຖືເປັນການເລີ່ມຕົ້ນຢ່າງເປັນທາງການຂອງສະພານິຕິບັນຍັດ ຊຸດທີ X ເຊິ່ງເປັນຊຸດທໍາອິດພາຍໃຕ້ສາທາລະນະລັດທີຫ້າ ທີ່ສ້າງຕັ້ງຂຶ້ນພາຍໃຕ້ລັດຖະທໍາມະນູນສະບັບໃໝ່.

ໃນການລົງຄະແນນສຽງ, ດັນຊາ ຄູຣູມາ (Dansa Kourouma) ອະດີດປະທານສະພາປ່ຽນຜ່ານແຫ່ງຊາດ ໄດ້ຮັບເລືອກຕັ້ງເປັນປະທານສະພາແຫ່ງຊາດ ທີ່ມີ 147 ທີ່ນັ່ງ ດ້ວຍຄະແນນສຽງສະໜັບສະໜູນ 129 ສຽງ ແລະ ບັດລົງຄະແນນທີ່ບໍ່ຖືກຕ້ອງ 18 ໃບ.

ການເລືອກຕັ້ງລັດຖະສະພາຄັ້ງຫຼ້າສຸດຂອງກີເນ ໄດ້ຈັດຂຶ້ນໃນວັນອາທິດທີ 31 ພຶດສະພາຜ່ານມາ; ສະພາແຫ່ງຊາດແມ່ນສະພາຕໍ່າຂອງລັດຖະສະພາແບບສອງສະພາ ທີ່ສ້າງຕັ້ງຂຶ້ນພາຍໃຕ້ລັດຖະທໍາມະນູນສະບັບໃໝ່ປີ 2025 ຂອງປະເທດໃນອາຟຣິກາຕາເວັນຕົກແຫ່ງນີ້, ໂດຍມາຈາກການເລືອກຕັ້ງໂດຍກົງ ມີວາລະ 5 ປີ.

ການເປີດກອງປະຊຸມສະພາຕໍ່າຄັ້ງນີ້ ຖືເປັນອີກບາດກ້າວໜຶ່ງໃນການພັດທະນາປ່ຽນຜ່ານທາງສະຖາບັນຂອງກີເນ.



## ຫຼາຍບໍລິສັດ...

(ຕໍ່ຈາກໜ້າ 1)

ເຊີຍ ແລະ ຊຸກຍູ້ຂະບວນການຕ່າງໆເນື່ອງໃນໂອກາດວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 71 ປີ ໂດຍຕາງໜ້າກ່າວຮັບຂອງທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ.

ໃນນີ້, ບໍລິສັດ ພີເອັດແອວ ກຣຸບ ຈໍາກັດຜູ້ດຽວ ປະກອບສ່ວນ 500 ລ້ານກີບ, ບໍລິສັດ ເຮືອງຈະເລີນ ກໍ່ສ້າງຄົບວົງຈອນ ແລະ ຂາເຂົ້າ-ຂາອອກ ຈໍາກັດຜູ້ດຽວ 100 ລ້ານກີບ, ບໍລິສັດ ຈະເລີນສຸກກໍ່ສ້າງ ຂົວ-ທາງ ແລະ ຊົນລະປະທານ ຈໍາກັດຜູ້ດຽວ 100 ລ້ານກີບ, ບໍລິສັດດາວພອນກໍ່ສ້າງ-ຂົວທາງ ຈໍາກັດຜູ້ດຽວ 100 ລ້ານກີບ, ບໍລິສັດ ໄຊຈະເລີນຊັບ ກໍ່ສ້າງ-ຂົວທາງ ເຄຫາສະຖານ ຈໍາກັດຜູ້ດຽວ 100 ລ້ານກີບ ແລະ ບໍລິສັດ ວຽງວອນ ຈໍາກັດຜູ້ດຽວ 100 ລ້ານກີບ ລວມທັງໝົດ 1 ຕື້ກີບ



## ການນຳ...

(ຕໍ່ຈາກໜ້າ 1)

(ສພຊ) - ເນື່ອງໃນໂອກາດສະເຫຼີມສະຫຼອງວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມ ຄົບຮອບ 49 ປີ (18 ກໍລະກົດ 1977 - 18 ກໍລະກົດ 2026), ສະຖານເອກອັກຄະລັດຖະທູດ ສສ.ຫວຽດນາມ ປະຈຳ ສປປ ລາວ ສົມທົບກັບສູນວັດທະນະທຳຫວຽດນາມ ແລະ ບໍລິສັດ Star Telecom (Unitel) ໄດ້ຈັດພິທີສາຍຮູບເງົາເລື່ອງ "ຝົນແດງ" (Mưa Đỏ) ໃນວັນທີ 16 ກໍລະກົດນີ້ ທີ່ນະຄອນຫຼວງວຽງຈັນ; ມີສະຫາຍ ນາງ ສຸນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະຫາຍ ຈັນສະໝອນ ຈັນຍາລາດ ອະດີດກຳມະການກົມການເມືອງສູນກາງພັກ, ອະດີດຮອງນາຍົກລັດຖະມົນຕີ, ອະດີດລັດຖະມົນຕີກະຊວງປ້ອງກັນປະເທດ, ບັນດາສະຫາຍອະດີດກຳມະການກົມການເມືອງສູນກາງພັກ, ກຳມະການສູນກາງພັກ, ອະດີດກຳມະການສູນກາງພັກ, ການນຳ ແລະ ຕາງໜ້າຈາກບັນດາຄະນະສູນກາງພັກ, ກະຊວງ, ຂະແໜງການຂອງລາວ ພ້ອມທັງບັນດາອົງການສື່ມວນຊົນຂອງ ລາວ ແລະ ຫວຽດນາມ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ສະຫາຍ ຫງວຽນ ມິງ ເຕິມ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ.ຫວຽດນາມ ປະຈຳ ສປປລາວ ກ່າວວ່າ: ສົນທິສັນຍາສະບັບນີ້ ແມ່ນເອກະສານທີ່ມີເນື້ອໃນຮອບດ້ານ, ມີຄຸນຄ່າຍຸດທະສາດຍາວນານ ແລະ ເປັນພື້ນຖານທາງການເມືອງ ແລະ ນິຕິກຳໜັກແໜ້ນທີ່ສຸດ ເພື່ອປັບປຸງ ແລະ ເພີ່ມທະວີຄວາມສາມັກຄີ, ສາຍພົວພັນພິເສດ ຫວຽດນາມ-ລາວ ໃນຍຸກສະໄໝໃໝ່. ສົນທິສັນຍາປີ 1977 ບໍ່ພຽງເປັນຫຼັກການປະຫວັດສາດທີ່ສະທ້ອນໃຫ້ເຫັນການແລກປ່ຽນການພົວພັນລະຫວ່າງສອງພັກ ໄປສູ່ການຮ່ວມມືຢ່າງຮອບດ້ານລະຫວ່າງສອງລັດອະທິປະໄຕ, ມີເອກະລາດ ແຕ່ຍັງເປັນກົດເກນແຫ່ງການດຳລົງຢູ່ ແລະ ເປັນແຫຼ່ງພະລັງອັນສຳຄັນ ທີ່ຮັບປະກັນໄຊຊະນະໃຫ້ແກ່ພາລະກິດການກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດຂອງແຕ່ລະປະເທດ; ບົນພື້ນຖານຂອງຈິດໃຈສາກົນນິຍົມ ກຳມະຊີບ ແລະ ຫຼັກການສະເໝີພາບ, ເຄົາລົບເອກະລາດ ແລະ ອະທິປະໄຕຂອງກັນແລະກັນ, ສົນທິສັນຍາປີ 1977 ໄດ້ສ້າງພື້ນຖານທາງນິຕິກຳ ເພື່ອໃຫ້ສອງປະເທດສາມາດບັນລຸພາລະກິດປະຫວັດສາດອັນຍິ່ງໃຫຍ່ ຄືການວາງກຳນົດເຂດຊາຍແດນແຫ່ງຊາດ ແລະ ການຮ່ວມມືຮອບດ້ານໃນຂົງເຂດການເມືອງ, ປກຊ-ປກສ, ການຕ່າງປະເທດ, ເສດຖະກິດ, ວັດທະນະທຳ, ການສຶກສາ, ເຕັກນິກ.

ໃນສະພາບການຫັນເປັນໂລກາພິວັດ ແລະ ປ່ຽນແປງໃໝ່ໃນປັດຈຸບັນ, ສົນທິສັນຍາສະບັບນີ້ ຍັງຄົງຮັກສາຄຸນຄ່າອັນສົມບູນ, ເປັນເຂັມທິດນຳທາງໃຫ້ສອງປະເທດສາມາດເຊື່ອມໂຍງເຂົ້າກັບສາກົນຢ່າງຕັ້ງໜ້າ ພ້ອມກັບຮັກສາເອກະລັກຂອງຕົນ, ພ້ອມທັງກຳນົດຂໍ້ຮຽກຮ້ອງໃໝ່ໃນການປັບປຸງຮູບແບບການຮ່ວມມືຢ່າງບໍ່ຢຸດຢັ້ງ ເພື່ອຄວາມຍືນຍົງຂອງທັງສອງປະຊາຊາດ; ນີ້ແມ່ນຊັບສິນອັນລ້ຳຄ່າທີ່ຄົນຮຸ່ນຫຼັງມີໜ້າທີ່ຮ່ວມກັນຮັກສາ ແລະ ເສີມຂະຫຍາຍ.ຫວນຄືນເສັ້ນທາງເກືອບເຄິ່ງສະຕະວັດ ນັບແຕ່ສົນທິສັນຍາປະຫວັດສາດໄດ້ລົງນາມ, ພວກເຮົາພາກພູມໃຈທີ່ເຫັນວ່າສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ, ຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ ນັບມື້ນັບປັບປຸງ ແລະ ພັດທະນາເຂົ້າສູ່ລວງເລິກ, ແທດຈິງ ແລະ ມີປະສິດທິຜົນໃນທຸກໆຂົງເຂດ.

ສະຫາຍ ຫງວຽນ ມິງ ເຕິມ ກ່າວຕື່ມວ່າ: ຮູບເງົາ "ຝົນແດງ" (Mưa Đỏ) ຜະລິດໂດຍກອງທັບປະຊາຊົນຫວຽດນາມ ຈະນຳພາພວກເຮົາຍ້ອນຄືນໄປສູ່ໄລຍະເວລາອັນອົງອາດໃນປີ 1972 ໂດຍສະທ້ອນໃຫ້ເຫັນຢ່າງແທດຈິງເຫດການຕໍ່ສູ້ໃນຕະຫຼອດ 81 ທັງເວັນທັງຄືນ ເພື່ອປົກປ້ອງກຳແພງບູຮານກວາງຈິ (Thành cổ Quảng Trị); ໃນໄລຍະເວລາບໍ່ເຖິງ 3 ເດືອນ, ດິນແດນແຫ່ງນັ້ນຕ້ອງຮັບເອົາລູກລະເບີດກວ່າ 328,000 ໂຕນ, ມີອຳນາດທຳລາຍທຽບເທົ່າລະເບີດນິວເຄລຍ 7 ລູກ, ກາຍເປັນ "ທະເລໄຟ" ອັນດຸເດືອດ ທີ່ສະແດງໃຫ້ເຫັນການທຳລາຍອັນໂຫດຮ້າຍຂອງສົງຄາມ. ຮູບເງົາເລື່ອງນີ້ ບໍ່ພຽງເປັນບົດນິພົນສິລະປະອັນໂດດ



ເດັ່ນທີ່ເຄີຍໄດ້ຮັບລາງວັນ ບົວຄຳ (Bông Sen Vàng) ແລະ ປີກວ່າວຄຳ (Cánh Diều Vàng) ເທົ່ານັ້ນ, ແຕ່ຍັງເປັນບົດກອນຍາວກ່ຽວກັບນ້ຳໃຈສະຫາຍ, ອຸດົມການຂອງບັນດານັກຮົບ "ທະຫານລຸງໂຮ່" ແລະ ນັກສຶກສາດີເດັ່ນທີ່ຍອມວາງປຶ້ມຮຽນໄວ້ເບື້ອງຫຼັງ ເພື່ອເຂົ້າຮ່ວມສົງຄາມປົກປັກຮັກສາເອກະລາດຂອງຊາດ. ຜ່ານຮູບເງົາອັນຊາບຊຶ້ງເຫຼົ່ານີ້, ທ່ານທູດຫວັງວ່າຄົນຮຸ່ນໃໝ່ຈະຍິ່ງເຫັນຄຸນຄ່າຂອງການເສຍສະຫຼະຂອງຮຸ່ນປູ່, ຮຸ່ນພໍ່ ແລະ ຮັບຮູ້ຢ່າງເລິກເຊິ່ງເຖິງຄວາມຮັບຜິດຊອບໃນການຮັກສາສັນຕິພາບ ກໍຄືຄວາມສາມັກຄີສະໜິດສະໜົມລະຫວ່າງສອງປະເທດຂອງພວກເຮົາ.

ໃນສະພາບການຫວຽດນາມ ກຳລັງຈັດຕັ້ງປະຕິບັດມະຕິເລກທີ 80-NQ/TW ວ່າດ້ວຍການພັດທະນາວັດທະນະທຳຢ່າງຕັ້ງໜ້າ, ຢັ້ງຢືນວ່າວັດທະນະທຳເປັນພື້ນຖານດ້ານຈິດໃຈ ແລະ ເປັນແຫຼ່ງກຳລັງພະລັງງານພາຍໃນອັນສຳຄັນໃຫ້ແກ່ການພັດທະນາຢ່າງຍືນຍົງ; ພ້ອມທັງຍູ້ແຮງການຈັດຕັ້ງປະຕິບັດມະຕິເລກທີ 57-NQ/TW ວ່າດ້ວຍການບຸກທະລຸໃນການພັດທະນາວິທະຍາສາດ, ເຕັກໂນໂລຊີ, ປ່ຽນແປງໃໝ່ປະດິດຄິດສ້າງ ແລະ ການຫັນເປັນດີຈິຕອນໃນນັ້ນ ການນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ແລະ ການຫັນເປັນດີຈິຕອນເຂົ້າໃນວຽກງານວັດທະນະທຳ ເປັນໜຶ່ງໃນຂໍ້ກຳນົດສຳຄັນ ແລະ ຖືເປັນກຳລັງໝູນກຸນແຈໃນການເຜີຍແຜ່ພາບຂອງຫວຽດນາມສູ່ເວທີສາກົນ. ຈາກບັນດາທິດທາງຍຸດທະສາດນີ້, ທ່ານທູດເຊື່ອວ່າ ທັງສອງຝ່າຍຈະສືບຕໍ່ເສີມຂະຫຍາຍການຮ່ວມມືໃຫ້ເລິກເຊິ່ງກວ່າອີກໃນຂົງເຂດຂ່າວສານແລະວຽກງານໂຄສະນາເຜີຍແຜ່ຕ່າງປະເທດ; ພວກເຮົາຄວນປະສານງານຢ່າງໃກ້ຊິດ ເພື່ອເຜີຍແຜ່ພາບພົດຂອງປະເທດ, ປະຊາຊົນ ແລະ ຜົນສຳເລັດຂອງແຕ່ລະປະເທດ, ພ້ອມທັງກະກຽມຢ່າງດີທີ່ສຸດໃຫ້ບັນດາກິດຈະກຳໃນປີສາມັກຄີມິດຕະພາບ ແລະ ການຫຸ້ນສ່ວນ ຫວຽດນາມ-ລາວ 2027 ທີ່ຈະມາເຖິງ.

ໂອກາດດັ່ງກ່າວ, ສະຫາຍ ຫງວຽນ ມິງ ເຕິມ ໄດ້ສະແດງຄວາມຂອບໃຈຕໍ່ການເຂົ້າຮ່ວມຂອງບັນດາສະຫາຍການນຳ ແລະ ພະນັກງານຈາກບັນດາກະຊວງ, ຂະແໜງການ ແລະ ອົງການຂອງ ສປປລາວ ໃນພິທີມື້ນີ້; ການເຂົ້າຮ່ວມຂອງບັນດາສະຫາຍ ແມ່ນຫຼັກຖານອັນຈະແຈ້ງທີ່ສຸດສະແດງເຖິງຄວາມເອົາໃຈໃສ່ຢ່າງເລິກເຊິ່ງຕໍ່ວຽກງານແລກປ່ຽນວັດທະນະທຳ, ປະກອບສ່ວນບຳລຸງສ້າງສາຍພົວພັນ ຫວຽດນາມ-ລາວ ໝັ້ນຄົງຖະໜົງແກ່ນຊົ່ວກາລະນານ.






*#ບ່າວກະບື*

**ຜົວ:** "ໝາຮ້າຍໆໂຕນັ້ນ ນ້ອງຄົງບໍ່ສາມາດຝຶກສອນມັນໄດ້ດອກນ້ອງເອີຍ"

**ເມຍ:** "ອ້າຍເອົ້າແບບບໍ່ຄິດ, ຈຳໄດ້ບໍ່ຕອນແຕ່ງດອງກັບໃໝ່ໆ, ອ້າຍກໍນັ້ນດື້ດ້ານກົວແລງຄືຊິຕາຍນັ້ນລະ"

***#BAOKBU***

**HUSBAND:** "You can't tame that violent dog darling"

**WIFE:** "Nonsense my dear! Don't you tecall how obstinate you were when we married?"

**ຜູ້ຊີ້ນຳ**

ທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ

**ຄະນະບັນນາທິການ**

ທ່ານ ບໍ ທານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ
ທ່ານ ອານຸສອນ ພູມມີທອນ